NPS WORKING PAPER AUGUST 2023

# ຄັງຄວາມຮູ້ທາງດ້ານນະໂຍບາຍ ຂອງ ສ ປປ ລາວ

## ການສ້າງຄວາມສາມາດດ້ານການຄົ້ນຄ້ວາໂດຍອີງຕາມຫຼັກຖານຕົວຈິງ ແລະ ການເຊື່ອມໂຍງລະຫວ່າງນະໂຍບາຍ ແລະ ຍຸດທະສາດ

ທ່ານ ປອ. ນາງ ລັດສະໝີ ພູນວິສຸກ (NAFRI) ທ່ານ ໄມເຄິລ ວີກເຕີ (ILRI) ທ່ານ ນາງ ແສງພະຈັນ ສອນທະວີໄຊ (IWMI) ແລະ CGIAR ສູນຄວາມຄິດລິເລີ່ມດ້ານນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ

## ສາລະບານ


**ບັນຊີລາຍຊື່ຕົວຫຍໍ້ ແລະ ຄຳຫຍໍ້ ... ii**

**ບົດນຳ ... 1**

**ວິທີການຄົ້ນຄ້ວາ ... 1**

**ຄວາມຕ້ອງການທີ່ຈຳເປັນສຳລັບການມີຄັງນະໂຍບາຍໃນຂະແໜງກະສິກຳ ... 2**

**ການສ້າງຕັ້ງຄັງນະໂຍບາຍ ... 3**

**ຜົນໄດ້ຮັບ ແລະ ຜົນຕອບຮັບ ... 7**

ຜົນໄດ້ຮັບທີ່ສຳຄັນ ... 7

**ຈຸດພົ້ນເດັ່ນຂອງການຄົ້ນຄ້ວາດ້ານນະໂຍບາຍ ... 8**

1. ການປູກກ້ວຍເປັນສິນຄ້າໃນ ສ ປປ ລາວ ... 8
2. ຂໍ້ຜູກພັນສັນຍາການຜະລິດກະສິກຳ ... 9
3. ການເຂົ້າເຖິງແຫຼ່ງເງິນກູ້ຢືມຂອງຊາວກະສິກອນ ... 9
4. ການວິເຄາະຄວາມຍືນຍົງດ້ານນະໂຍບາຍສີຂຽວ ແລະ ສະຖາບັນຕ່າງໆ ໃນ ສ ປປລາວ ... 10

**ການຖອດຖອນບົດຮຽນ ... 19**

**ບາດກ້າວຕໍ່ໄປ: ຂໍ້ສະເໜີແນະສຳລັບສະຖານະໃນອານະຄົດຂອງການເຊື່ອມໂຍງລະຫວ່າງວິທະຍາສາດ ແລະ ນະໂຍບາຍ ... 11**

**ກ່ຽວກັບນັກຄົ້ນຄ້ວາ ... 13**

**ຄວາມຮູ້ບູນຄຸນ ແລະ ຄຳຂອບໃຈ ... 13**

**ເອກະສານອ້າງອີງ ... 25**

**ເອກະສານຊ້ອນທ້າຍ1: ລາຍຊື່ບົດຄົ້ນຄ້ວາ ແລະ ສິ່ງຕີພິມ ... 26**

## ຮູບພາບ

**ຮູບພາບ** 1: ໂຄງສ້າງລວມຂອງຄັງນະໂຍບາຍເພື່ອສະໜັບສະໜູນຂະບວນການສ້າງນະໂຍບາຍໃນຂະແໜງກະສິກຳ ........ 9
**ຮູບພາບ** 2: ເຄືອຂ່າຍການຄົ້ນຄ້ວາ ແລະ ການຮ່ວມມື........ 11

## ຕາຕະລາງ

**ຕາຕະລາງ** 1: ປະຫວັດຄວາມເປັນມາຂອງການຄົ້ນຄ້ວາຄັງນະໂຍບາຍ........ 3

# ບັນຊີລາຍຊື່ຕົວຫຍໍ້ ແລະ ຄຳຫຍໍ້

| | |
|---|---|
| ACIAR | ສູນຄົ້ນຄ້ວາກະສິກຳສາກົນຂອງປະເທດອົດສະຕຣາລີ |
| AFPRC | ສູນຄົ້ນຄ້ວານະໂຍບາຍກະສິກຳ ແລະ ປ່າໄມ້ |
| AI | ປັນຍາປະດິດ |
| ANR | ກະສິກຳ ແລະ ແຫຼ່ງຊັບພະຍາກອນທຳມະຊາດ |
| ARD | ກະສິກຳ ແລະ ພັດທະນາຊົນນະບົດ |
| CAPD | ຄະນະກຳມະການພັດທະນານະໂຍບາຍກະສິກຳ |
| CDPR | ສູນຄົ້ນຄ້ວານະໂຍບາຍການພັດທະນາ |
| CF | ສັນຍາກະສິກຳ/ການສົ່ງເສີມຜະລິດກະສິກຳແບບມີຂໍ້ຜູກພັນສັນຍາ |
| CIAT | ສູນກະສິກຳເຂດຮ້ອນສາກົນ |
| CIP | ສູນມັນຕົ້ນສາກົນ |
| CIRAD | ສູນຄວາມຄິດລິເລີ່ມດ້ານນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ |
| DOPC | ພະແນກແຜນການ ແລະ ການຮ່ວມມື |
| DOPLA | ກົມນະໂຍບາຍ ແລະ ນິຕິກຳ |
| ERDRC | ສູນຄົ້ນຄ້ວາເສດຖະກິດ ແລະ ພັດທະນາຊົນນະບົດ |
| FAO | ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ |
| GOL | ລັດຖະບານແຫ່ງ ສ ປປ ລາວ |
| IFAD | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| IFPRI | ສະຖາບັນຄົ້ນຄ້ວານະໂຍບາຍອາຫານສາກົນ |
| IITA | ສະຖາບັນກະສິກຳເຂດຮ້ອນສາກົນ |
| ILRI | ສະຖາບັນຄົ້ນຄ້ວາການລ້ຽງສັດສາກົນ |
| IPSARD | ສະຖາບັນນະໂຍບາຍ ແລະ ຍຸດທະສາດກະສິກຳ ແລະ ພັດທະນາຊົນນະບົດ |
| IWMI | ສະຖາບັນຄຸ້ມຄອງນ້ຳສາກົນ |
| LURAS | ບໍລິການໃຫ້ຄຳປຶກສາດ້ານຊົນນະບົດທີ່ເຂດພູດອຍຂອງລາວ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |

| | |
|---|---|
| MARD | ກະຊວງກະສິກຳ ແລະ ພັດທະນາຊົນນະບົດ |
| MOIC | ກະຊວງອຸດສາຫະກຳ ແລະ ການຄ້າ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| NAFRI | ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ |
| NARDT | ໂຄງການຄົ້ນຄ້ວາເຄືອຂ່າຍພັດທະນາຄວາມຮູ້ທາງດ້ານກະສິກຳ ແລະ ພັດທະນາຊົນນະບົດ ສຳລັບບັນດາປະເທດໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ |
| NIER | ສະຖາບັນຄົ້ນຄ້ວາເສດຖະກິດແຫ່ງຊາດ |
| NPS | ນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ |
| NTFP | ຜະລິດຕະພັນເຄື່ອງປ່າຂອງດົງ |
| NUOL | ມະຫາວິທະຍາໄລແຫ່ງຊາດລາວ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PAG | ກຸ່ມທີ່ປຶກສາດ້ານນະໂຍບາຍ |
| PCAP | ໂຄງການສ້າງຂີດຄວາມສາມາດໃນການຄຸ້ມຄອງໂຄງການລົງທຶນພາກລັດ |
| PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| PIP | ໂຄງການລົງທຶນພາກລັດ |
| PPP | ການມີສ່ວນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ |
| PRC | ສາທາລະນະລັດ ປະຊາຊົນຈີນ |
| PTT | ຄັງຄວາມຮູ້/ຄັງປັນຍາທາງດ້ານນະໂຍບາຍ |
| SDC | ອົງການພັດທະນາ ແລະ ການຮ່ວມມືຂອງສະວິດ |
| SEI | ສະຖາບັນສິ່ງແວດລ້ອມ Stockholm |
| SRAPD | ໂຄງການສ້າງຄວາມເຂັ້ມແຂງການຄົ້ນຄ້ວານະໂຍບາຍເພື່ອພັດທະນານະໂຍບາຍກະສິກຳ |
| SSWG | ຄະນະປະຕິບັດກຸ່ມວຽກງານຍ່ອຍ |
| SSWGRD | ຄະນະປະຕິບັດກຸ່ມວຽກງານຍ່ອຍທາງດ້ານການພັດທະນາຊົນນະບົດ |
| SWG | ຄະນະປະຕິບັດວຽກງານຂະແໜງການ |
| SWGARD | ຄະນະປະຕິບັດວຽກງານຂະແໜງກະສິກຳ ແລະ ພັດທະນາຊົນນະບົດ |
| TABI | ຄວາມຄິດລິເລີ່ມການກະສິກຳຊີວະນາໆພັນ |
| WLE | ນ້ຳ, ດິນ ແລະ ລະບົບນິເວດ |

# ບົດນຳ

ສຳລັບການຄົ້ນຄ້ວາ ຄັງຄວາມຮູ້ທາງດ້ານນະໂຍບາຍ ແມ່ນໄດ້ລິເລີ່ມຈັດຕັ້ງປະຕິບັດໂຄງການຄົ້ນຄ້ວາ ພາຍໃນ ເດືອນມິຖຸນາ ປີ 2012 ເປັນຕົ້ນມາ, ໂຄງການນີ້ ສັງກັດໃນໂຄງປະກອບກົງຈັກການຄົ້ນຄ້ວາ ຂອງ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ຈຸດປະສົງ ຂອງໂຄງການຄົ້ນຄ້ວາເພື່ອຕອບ ສະໜອງຄຳແນະນຳທາງດ້ານນະໂຍບາຍ ໂດຍອີງໃສ່ຫຼັກຖານຂໍ້ມູນສຳຄັນ ສຳລັບຕອບສະໜອງໃຫ້ແກ່ ບັນດາກະຊວງທີ່ມີສ່ວນກ່ຽວພັນ ຂອງພາກລັດຖະບານ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນທີ່ ກ່ຽວຂ້ອງ. ເພື່ອມີສ່ວນຮ່ວມໃນການປຶກສາຫາລື ເຫັນດີເຫັນພ້ອມ ໃນການແກ້ໄຂບັນຫານະໂຍບາຍແຫ່ງ ຊາດ ທີ່ມີຜົນດຳເນີນງານໃນລະດັບຂັ້ນເມືອງ ແລະ ຂັ້ນແຂວງ. ຈຸດປະສົງຫຼັກ ເພື່ອສະໜັບສະໜູນປັບປຸງ ຊີວິດການເປັນຢູ່ຂອງຜູ້ທຸກຍາກໃນຂົງເຂດຊົນນະບົດ. ໂຄງການຄົ້ນຄ້ວານີ້ ຈຶ່ງເປັນສ່ວນໜຶ່ງຂອງຄະນະ ປະຕິບັດງານ ກ່ຽວກັບຂະແໜງກະສິກຳ ແລະ ພັດທະນາຊົນນະບົດ. ເຊິ່ງປະກອບດ້ວຍເຄືອຂ່າຍນັກຄົ້ນຄ້ ວາ ຈາກບັນດາກົມ, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ມະຫາວິທະຍາໄລແຫ່ງຊາດລາວ.

ໂຄງການຄົ້ນຄ້ວານີ້ ແມ່ນໄດ້ດຳເນີນການຈັດຕັ້ງປະຕິບັດເປັນໄລຍະເວລາຫຼາຍກ່ວາ 8 ປີ, ນັບຕັ້ງແຕ່ປີ 2012 ຫາ 2020, ໂດຍດຳເນີນການຄົ້ນຄ້ວາ ແບບມີສ່ວນຮ່ວມໃນການເຈລະຈາ ແລະ ປຶກສາຫາລືທາງ ດ້ານນະໂຍບາຍ ໃນຫົວຂໍ້ບຸລິມະສິດ ທີ່ຈະຂັບເຄື່ອນໃຫ້ແທດເໝາະຕາມຄວາມຮຽກຮ້ອງຕ້ອງການເຊັ່ນ: ກໍລະນີການສຶກສາຫົວຂໍ້ ຄວາມໝັ້ນຄົງທາງດ້ານການຄ້ຳປະກັນສະບຽງອາຫານ ແລະ ການດຳລົງຊີວິດ, ການປູກພືດກະສິກຳເພື່ອເປັນສິນຄ້າ, ການປະກັນໄພທາງການກະສິກຳ, ການປູກກ້ວຍ ແລະ ການປູກ ຢາງພາລາ, ລະບົບການລ້ຽງສັດ ແລະ ການບໍລິໂພກອາຫານ. ໂຄງການຄົ້ນຄ້ວາຄັງຄວາມຮູ້ທາງດ້ານ ນະໂຍບາຍ ໄດ້ຮັບການສະໜັບສະໜູນຈາກຫຼາຍອົງການລວມມີ SDC, CIRAD, IFAD, FAO, LURAS ແລະ ໂຄງການ CGIAR ຄົ້ນຄວ້າສຳລັບນ້ຳ, ດິນ ແລະ ລະບົບນິເວດ (ສະຖາບັນຄຸ້ມຄອງນ້ຳສາກົນ). ສຳລັບ ໂຄງການ IFAD ແມ່ນເປັນໜຶ່ງໂຄງການທີ່ສຳຄັນທີ່ສຸດ ໂດຍສະໜັບສະໜູນໂຄງການຄົ້ນຄວ້າ ຄັງຄວາມ ຮູ້ທາງດ້ານນະໂຍບາຍ ເປັນໄລຍະເວລາ 5 ປີ ຄື 2020-2024, ຊຶ່ງສະໜັບສະໜູນພາຍໃຕ້ ໂຄງການຄົ້ນຄ້ວາ ເຄືອຂ່າຍພັດທະນາຄວາມຮູ້ທາງດ້ານກະສິກຳ ແລະ ພັດທະນາຊົນນະບົດ ສຳລັບບັນດາປະເທດໃນອະນຸ ພາກພື້ນລຸ່ມແມ່ນ້ຳຂອງ ມີຊື່ຫຍໍ້ວ່າ ໂຄງການ (NARDT).

ຈຸດປະສົງ ຂອງກໍລະນີການສຶກສານີ້ ແມ່ນເພື່ອສ້າງແຜນຜັງການຮຽນຮູ້ຈາກການຄົ້ນຄ້ວາ ຄັງຄວາມຮູ້ທາງດ້ານນະໂຍບາຍ ສໍາລັບການອອກແບບແຜນນະໂຍບາຍວິທີການຄົ້ນຄວ້າ ຫລື ເຄືອຂ່າຍແຜນການຄົ້ນຄວ້າໃນອະນາຄົດ. ເອີ້ງພາບລວມຂອງການສຶກສາຄົ້ນຄວ້າແມ່ນມຸ້ງເນັ້ນໃຫ້ເຫັນບົດບາດຄວາມສໍາຄັນຂອງນະໂຍບາຍພາຍໃນ ທີ່ໂຄງການ ຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ດໍາເນີນໂຄງການ ແລະ ຈັດຕັ້ງປະຕິບັດຂຶ້ນມາໂດຍທົບທວນໂຄງສ້າງການຈັດຕັ້ງບົດບາດໜ້າທີ່ຮຽນຮູ້ຫຼັກ ແລະ ສະເໜີກິດຈະກໍາການຄົ້ນຄວ້າທີ່ໄດ້ຮັບການຄັດເລືອກຕາມແຜນວຽກ ແລະ ບອກກັບຜົນກະທົບທີ່ໄດ້ຮັບ. ສຸດທ້າຍນີ້, ກໍລະນີການສຶກສາຄົ້ນຄ້ວາ ຍັງມີການຖອດຖອນເອົາບາງບົດຮຽນທີ່ສໍາຄັນ ເພື່ອໃຫ້ໄດ້ຮັບການພິຈາລະນາໃນເວທີການສ້າງນະໂຍບາຍແຜນຜັງວິທະຍາສາດໃນອະນາຄົດ.

## ວິທີການຄົ້ນຄ້ວາ

ກໍລະນີການສຶກສາຄັ້ງນີ້ ແມ່ນບໍ່ມຸ້ງເນັ້ນລະບຽບ ຫລື ຮູບແບບຫລາຍເກີນໄປ ໝາຍເຖິງເປັນພຽງການປະເມີນຜົນໄດ້ຮັບ ຂອງວຽກງານທີ່ຈັດຕັ້ງປະຕິບັດໂດຍ ໂຄງການຄົ້ນຄ້ວາຄັງຄວາມຮູ້ທາງດ້ານນະໂຍບາຍກະສິກໍາ ແລະ ພັດທະນາຊົນນະບົດ. ຊຶ່ງມີການກະກຽມຄໍາຖາມສໍາພາດ ໂດຍມຸ້ງເນັ້ນການສໍາພາດຫຼາຍໆພາກສ່ວນທີ່ກ່ຽວຂ້ອງ ໃນວຽກງານການພັດທະນາຄັງຄວາມຮູ້ທາງດ້ານນະໂຍບາຍ ເພື່ອຕ້ອງການຊາບວ່າມີການດໍາເນີນງານໄປໃນທິດທາງໃດ ພ້ອມທັງມີການທົບທວນບັນດາເອກະສານທີ່ກ່ຽວຂ້ອງ ແລະ ຈັດກອງປະຊຸມ ເພື່ອກວດສອບຜົນການຄົ້ນຄວ້າ.

ສິ່ງທີ່ເຫັນໄດ້ຢ່າງຈັດເຈນ ພວກເຮົາໄດ້ຄົ້ນພົບວ່າ ຍັງມີອີກຫຼາຍອົງການ ແລະ ສະຖາບັນ ທີ່ຍັງໄດ້ເຮັດການຄົ້ນຄວ້າກ່ຽວກັບຄັງຄວາມຮູ້ດ້ານນະໂຍບາຍ ໃນຂະແໜງກະສິກໍາ ແລະ ຊັບພະຍາກອນທໍາມະຊາດ. ແຕ່ຈຸດປະສົງ, ຂອງການຄົ້ນຄວ້າຄັ້ງນີ້ ເປັນພຽງເພື່ອການຖອດຖອນບົດຮຽນຈາກວິທີການເລີ່ມຈັດຕັ້ງປະຕິບັດ ແລະ ດໍາເນີນງານຂອງໂຄງການຄັງຄວາມຮູ້ດ້ານນະໂຍບາຍ, ການປຶກສາຫາລືກັນ, ການພົວພັນກັນ ມັນມີປະຕິກິລິຍາແນວໃດ ໃນການໂຕ້ຕອບຂອງການຄົ້ນຄ້ວານະໂຍບາຍ ແລະ ສັງລວມຈຸດອ່ອນ ທີ່ເປັນຜົນຂອງການຄົ້ນຄ້ວາກ່ຽວກັບນະໂຍບາຍ ເພື່ອໃຫ້ແທດເໝາະກັບການຕັດສິນໃຈຂອງຜູ້ສ້າງນະໂຍບາຍ ແລະ ຜົນການຄົ້ນຄວ້າເຫຼົ່ານີ້ຈະຖືກນໍາໃຊ້ເຂົ້າໃນການອອກແບບຕາມແຜນຍຸດທະສາດ ທີ່ເປັນເຄືອຂ່າຍການຄົ້ນຄ້ວານະໂຍບາຍໃນອະນາຄົດ.

## ສິ່ງທີ່ຈຳເປັນທາງດ້ານຄັງຄວາມຮູ້ນະໂຍບາຍໃນຂະແໜງກະສິກຳ

ນະໂຍບາຍການພັດທະນາ ໃນຂະແໜງກະສິກຳ ແລະ ປ່າໄມ້ ໃນ ສ ປປ ລາວ, ແມ່ນໄດ້ມີການຜັນຂະຫຍາຍຜ່ານມາໃນຊ່ວງໄລຍະເວລາປະມານ 20 ປີແລ້ວ, ຊຶ່ງສອດຄ່ອງກັບການປ່ຽນແປງຢ່າງວ່ອງໄວໃນທົ່ວປະເທດ. ມັນໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການຫຼາຍຂຶ້ນ ໃນການຕອບສະໜອງຕໍ່ການຊຸກຍູ້ການປ່ຽນແປງ, ໃນຂະນະທີ່ມີຄວາມດຸ່ນດ່ຽງທາງດ້ານການເມືອງ ຈາກພັກປະຊາຊົນປະຕິວັດລາວ ແລະລັດຖະບານແຫ່ງ ສປປລາວ. ຂະບວນການພັດທະນານະໂຍບາຍ ຍັງກາຍເປັນຂອງຄົນລາວຫຼາຍຂຶ້ນ. ໂດຍມີພະນັກງານລັດ ແລະ ໜ່ວຍງານຕ່າງໆ ທີ່ສ້າງແຜນຍຸດທະສາດ ແລະ ນະໂຍບາຍ ຊຶ່ງເຫັນໄດ້ຊັດເຈນວ່າໄດ້ຮັບການສະໜັບສະໜູນຈາກຊ່ຽວຊານທີ່ປຶກສາຕ່າງປະເທດໜ້ອຍລົງ.

ການຍອມຮັບ ແລະ ການນຳໃຊ້ຜົນການຄົ້ນຄວ້າໂດຍອີງໃສ່ຫຼັກຖານທີ່ມີຢູ່ຈິງ ແລະ ການສະໜັບສະໜູນຂໍ້ມູນໃນຂະບວນການສ້າງນະໂຍບາຍ ແມ່ນຍັງພັດທະນາໄປຕາມການເວລາ ແລະ ມີການຈັດລຽງເພື່ອຊີ້ໃຫ້ເຫັນບາງການປ່ຽນແປງຂອງແຕ່ລະໄລຍະໃນຕາຕະລາງ 1 ຊຶ່ງລາຍລະອຽດ ດັ່ງລຸ່ມນີ້.

### ຕາຕະລາງ 1: ປະຫວັດຄວາມເປັນມາທາງດ້ານຄັງຄວາມຮູ້ນະໂຍບາຍ

| ຊ່ວງໄລຍະເວລາ | ນະໂຍບາຍກ່ຽວຂ້ອງກັບການພັດທະນາ | ການຄົ້ນຄ້ວານະໂຍບາຍ |
|---|---|---|
| 2004–2011 | ການລົງທຶນຂະໜາດໃຫຍ່ໃນການຜະລິດເປັນ<br>ສິນຄ້າຄືສັນຍາພັນທະ ,ຢາງພາລາ)<br>,ກະສິກຳ<br>ສາລີ ແລະ ອື່ນໆ)<br>- ການພັດທະນາຂອງລັດຖະບານຄະນະ ,<br>ບໍລິຫານງານຂອງຜູ້ໃຫ້ທຶນ ແລະ ໂຄງການເຂດ<br>ເນີນສູງຂອງລາວ | - ການສ້າງຕັ້ງໜ່ວຍງານຄົ້ນຄ້ວາເສດຖະກິດ- ສັງຄົມ<br>ທີ່ NAFRI ປີ 2003 ແລະ ໄດ້ຜັນຂະຫຍາຍເປັນ<br>ສູນຄົ້ນຄ້ວານະໂຍບາຍ ປີ 2008<br>- ການຄົ້ນຄ້ວາ ແລະ ປຶກສາຫາລືກ່ຽວກັບຢາງພາລາ,<br>ການວາງແຜນນຳໃຊ້ທີ່ດິນ ,ສັນຍາກະສິກຳ ,<br>,ປ່າໄມ້<br>ການປູກພືດແບບເລື່ອນລອຍ |
| 2012–2014 | - ການລົງທຶນທາງດ້ານການຄ້າເພີ່ມຂຶ້ນ | - ການສ້າງຕັ້ງທາງດ້ານຄັງຄວາມຮູ້ນະໂຍບາຍ ໂດຍໄດ້<br>ຮັບການສະໜັບສະໜູນຈາກ IFAD, FAO ແລະ<br>SDC<br>- ການສຶກສາການຄົ້ນຄ້ວາ/ທີ່ໄດ້ຈັດຕັ້ງ |

| | | |
|---|---|---|
| | | ປະຕິບັດແລ້ວ |
| 2015–2020 | - ການສ້າງຕັ້ງກົມນະໂຍບາຍ ແລະ ນິຕິກຳ (2017)<br>- ຍຸດທະສາດການພັດທະນາກະສິກຳ (2019)<br>- ຍຸດທະສາດການເຕີບໂຕສີຂຽວ (2019) | - ສະໜັບສະໜູນຈາກ SDC, CGIAR, SEI, CIRAD<br>- ສູນຄົ້ນຄ້ວານະໂຍບາຍ ປ່ຽນເປັນສູນຄົ້ນຄ້ວາເສດຖະກິດ ແລະ ພັດທະນາຊົນນະບົດ (2019)<br>- ຫຼາຍກ່ວາ 16 ການສຶກສາໄດ້ດຳເນີນ |
| 2020–2024 | - ການຍຸບຂອງກົມນະໂຍບາຍ ແລະ ນິຕິກຳ (2022)<br>- ກອບວຽກກະສິກຳສີຂຽວ ແລະ ຍືນຍົງ (2021)<br>- ການເປີດເສັ້ນທາງລົດໄຟລາວ-ຈີນ (2022)<br>- ວາລະແຫ່ງຊາດ ເພື່ອແກ້ໄຂບັນຫາເສດຖະກິດແຫ່ງຊາດ ແລະ ໄພເງິນເຟີ້ | ພາຍໃຕ້ການສະໜັບສະໜູນຂອງໂຄງການ NARDT ໄດ້ມີການສຶກສາ/ຄົ້ນຄ້ວາຫຼາຍກ່ວາ 10 ການວາຍການ<br>- ໂອກາດທາງການຕະຫຼາດຂອງຂະແໜງກະສິກຳຜ່ານທາງລົດໄຟລາວ-ຈີນ<br>- ປະເມີນການມີສ່ວນຮ່ວມຂອງພາກລັດ ແລະ ເອກະຊົນກ່ລະນີການສຶກສາ ງົວ, ເຂົ້າ, ຢາງພາລາ ແລະ ມັນຕົ້ນ.<br>- ການປະເມີນນະໂຍບາຍການພັດທະນາກະສິກຳໃນບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງ<br>- ຕົວແບບນະວັດຕະກຳການກະສິກຳ ແລະ ພັດທະນາຊົນນະບົດ<br>- ນະໂຍບາຍການຄ້າສຳລັບການຜະລິດຕະພັນກະສິກຳຈາກປະເທດພາກພື້ນລຸ່ມແມ່ນ້ຳຂອງໄປສປຈີນ<br>- ການຄ້າຊາຍແດນລະຫວ່າງບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງ |

**(ແຫຼ່ງຂໍ້ມູນ: ERDRC 2023)**

ເພື່ອເຂົ້າໃຈເຖິງວິທີການຈັດຕັ້ງປະຕິບັດນະໂຍບາຍ ຂອງໂຄງການຄົ້ນຄ້ວາທາງດ້ານຄັງຄວາມຮູ້ນະໂຍບາຍ, ສິ່ງສຳຄັນຄືຕ້ອງການກວດສອບວ່າເກີດຂຶ້ນໄດ້ແນວໃດ. ການຄົ້ນຄວ້ານະໂຍບາຍເປັນຫົວຂໍ້ຕ້ອງຫ້າມ ຈົນຮອດຕົ້ນຊຸມປີ 2000 ເນື່ອງຈາກວ່ານະໂຍບາຍຖືກກຳນົດໂດຍພາກລັດຖະບານ. ນະໂຍບາຍ ແລະ ຄຳສັ່ງບັງຄັບໃຊ້ເຫຼົ່ານັ້ນ ແມ່ນບໍ່ຄວນຖືກຕັ້ງຄຳຖາມ/ຖືກຖາມ.

ໃນປີ 2003, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ໄດ້ສ້າງຕັ້ງໜ່ວຍງານຄົ້ນຄວ້າເສດຖະກິດ-ສັງຄົມແຫ່ງທຳອິດຂອງຕົນ ພາຍໃນພະແນກຄຸ້ມຄອງຖານຂໍ້ມູນ, ຂໍ້ມູນຂ່າວສານ ແລະ ແຜນຍຸດທະສາດ. ຈຸດສຸມໃນເບື້ອງຕົ້ນຂອງວຽກງານສ່ວນໃຫຍ່ແມ່ນການຄົ້ນຄວ້າທີ່ຫລາກຫຼາຍດ້ານວິຊາການ. ພະແນກດັ່ງກ່າວໄດ້ດຳເນີນການສຶກສາໃນຫົວຂໍ້ຕ່າງໆ ເຊັ່ນ: ການເງິນບ້ານ, ການສົ່ງເສີມ ແລະ ເສດຖະກິດຂອງການປູກພືດເປັນສິນຄ້າ, ການສຶກສາລະບົບຕ່ອງໂສ້ການຕະຫຼາດ ສຳລັບການປູກພືດ ແລະ ການລ້ຽງສັດ, ການເຊື່ອມໂຍງ ລະຫວ່າງພືດເປັນສິນຄ້າ ແລະ ຄວາມທຸກຍາກ, ການຍອມຮັບຂອງຊາວກະສິກອນໃນການຄົ້ນຄວ້າລະບົບການປູກຝັງ, ຫັນປ່ຽນຂອງການປູກຝັງແບບເລື່ອນລອຍ, ການສຶກສາຕ່າງໆກ່ຽວຂ້ອງກັບລັກສະນະການຜະລິດຢາງພາລາຂະໜາດນ້ອຍ, ແລະ ຍັງໄດ້ຄົ້ນຄ້ວາກໍລະນີການສຶກສາກ່ຽວກັບ ການອົບພະຍົບຂອງປະຊາຊົນຈາກຊົນນະບົດ ໄປສູ່ຕົວເມືອງ (NAFRI 2008).

ໃນກອງປະຊຸມສຳມະນາ ກ່ຽວກັບການພັດທະນາໂຄງການເຂດເນີນສູງ ປີ 2003 ເຊິ່ງຈັດຕັ້ງຂຶ້ນໂດຍສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ລວມມີແຂກຜູ້ເຂົ້າຮ່ວມທັງໝົດ 300 ຄົນ, ໄດ້ເຕົ້າໂຮມກັນເພື່ອແບ່ງປັນ ບັນດາບັນຫາ, ບົດຮຽນ ແລະ ວິທີແກ້ໄຂ ການເຄື່ອນໄຫວຮັກສາສະຖຽນລະພາບການປູກຝັງ ແລະ ຫຼຸດຜ່ອນຄວາມທຸກຍາກ ຢູ່ເຂດເນີນສູງ. ກອງປະຊຸມໄດ້ໃຫ້ຄຳເຫັນທີ່ມີລັກສະນະສ້າງສັນ ແລະ ມີການອະທິບາຍເຖິງຄວາມສຳຄັນ ຕໍ່ການແຊກແຊງເຂົ້າເຂດພູດອຍ ແລະ ໄດ້ຮັບການຍ້ອງຍໍຈາກຜູ້ຕັດສິນໃຈຈາກກະຊວງກະສິກຳ ແລະ ປ່າໄມ້. ກອງປະຊຸມສຳມະນາຄັ້ງນີ້ ໄດ້ເສີມສ້າງບົດບາດຂອງ NAFRI ໃນການສະໜອງການຄົ້ນຄວ້າດ້ານຫຼັກຖານເພື່ອສະໜັບສະໜູນການເສີມສ້າງທາງດ້ານນະໂຍບາຍ.

ນັບແຕ່ປີ 2004 ເປັນຕົ້ນມາ, ປະເທດລາວໄດ້ມີການປ່ຽນແປງຢ່າງໄວວາ ໃນຂະແໜງກະສິກຳ ໂດຍມີການລົງທຶນຂະໜາດໃຫຍ່ໃນການປູກພືດເປັນສິນຄ້າ ແລະ ການນຳໃຊ້ທີ່ດິນເຊັ່ນ: ຢາງພາລາ, ສາລີ, ຊາ ແລະ ພືດອື່ນໆ. ເຫັນໄດ້ວ່າຄວາມຕ້ອງການງຄົ້ນຄວ້າແມ່ນເພີ່ມຂຶ້ນ ແລະ ລັດຖະບານ ໄດ້ຮຽກຮ້ອງໃຫ້ (ແລະ ຍິນດີຕ້ອນຮັບ) ການຄົ້ນຄວ້າເພື່ອໃຫ້ຄຳແນະນຳ ກ່ຽວກັບຫຼັກຖານເພື່ອແກ້ໄຂບັນຫາເຫຼົ່ານີ້. ໃນປີ 2008, ລັດຖະບານ ແລະ ຄູ່ຮ່ວມພັດທະນາຜູ້ໃຫ້ທຶນ ໄດ້ສ້າງຕັ້ງຄະນະປະຕິບັດງານຂອງຂະແໜງການ ແລະ ຂະແໜງການຫຍ່ອຍ ເພື່ອປະສານງານວຽກງານການພັດທະນາໃຫ້ດີຂຶ້ນ, ພ້ອມທັງປະຕິບັດການປຶກສາຫາລືດ້ານນະໂຍບາຍ ແລະ ເຮັດໃຫ້ຄວາມຕ້ອງການໃນການຄົ້ນຄວ້າ ໂດຍອີງໃສ່ຫຼັກຖານເພື່ອການປຶກສາຫາລືໃຫ້ຈັດເຈນ.

ໃນປີ 2008, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ໄດ້ສ້າງຕັ້ງສູນທີ່ບໍ່ຄົ້ນຄ້ວາກ່ຽວກັບການຄ້າ ເຊິ່ງເປັນສູນທຳອິດທີ່ຕັ້ງຂຶ້ນທີ່ມີຊື່ວ່າ ສູນຄົ້ນຄວ້ານະໂຍບາຍກະສິກຳ ແລະ ປ່າໄມ້ (AFPRC), ປະຈຸບັນ, ເອີ້ນວ່າສູນຄົ້ນຄວ້າເສດຖະກິດ ແລະ ພັດທະນາຊົນນະບົດ (ERDRC). ສູນການຄົ້ນຄວ້ານີ້ ສະແດງໃຫ້ເຫັນເຖິງບົດບາດວິວັດທະນາຂອງ NAFRI ໃນການກຳນົດນະໂຍບາຍຂະແໜງການ ແລະ ຂະບວນການຈັດຕັ້ງປະຕິບັດ, ເຊັ່ນດຽວກັນກັບວິວັດທະນາການງຄົ້ນຄ້ວາເສດຖະກິດ-ສັງຄົມ, ທີ່ດຳເນີນພາຍໃຕ້ NAFRI (NAFRI 2008). ພາຍໃນການນຳຂອງ AFPRC ແມ່ນເປັນບົດບາດສູນລວມຂອງນັກຄົ້ນຄ້ວາ ລວມເຖິງການດຳເນີນ ແລະ ສັງລວມການວິເຄາະນະໂຍບາຍ, ດຳເນີນການສົນທະນາກັບບັນດາຜູ້ກຳນົດນະໂຍບາຍ, ຊຸກຍູ້ການໂຕ້ວາທີກ່ຽວກັບບັນຫາຍຸດທະສາດ ແລະ ເຊື່ອມໂຍງວິທະຍາສາດທຳມະຊາດທີ່ແຕກຕ່າງກັບບັນຫາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

ຮອດປີ 2010, ຜົນຕອບຮັບ ຈາກການໂອ້ລົມສົນທະນາໄດ້ຮັບການຮັບຮູ້ ແລະ ມີການປຶກສາຫາລືທາງດ້ານນະໂຍບາຍ ພ້ອມທັງ ການໃຫ້ຄຳຄິດເຫັນທາງດ້ານນະໂຍບາຍ ໄດ້ຮັບການຍອມຮັບຈາກຫຼາຍອົງກອນ ແລະ ຫຼາຍຄົນ ແລະ ຍັງໄດ້ຕົກລົງດີເຫັນ ຈາກທຸກພາກສ່ວນໃນຂັ້ນລັດຖະບານຫຼາຍຂຶ້ນ ແລະ ພະນັກງານຮຸ່ນໜຸ່ມໄດ້ຮັບການຝຶກອົບຮົມໃນການຄົ້ນຄວ້າຄັງຄວາມຮູ້ທາງດ້ານນະໂຍບາຍ ໂດຍອີງໃສ່ຫຼັກຖານ, ຊຶ່ງເຫັນໄດ້ຊັດເຈນວ່າ ໃນຍຸດທະສາດກະສິກຳ 2020 (MAF, 2010) ແມ່ນການຄົ້ນຄວ້ານະໂຍບາຍທີ່ໄດ້ຮັບການຍອມຮັບ ວ່າເປັນສ່ວນໜຶ່ງທີ່ສຳຄັນຂອງແຜນການສ້າງຍຸດທະສາດ, ໂດຍຍຸດທະສາດດັ່ງກ່າວ ໄດ້ອະທິບາຍເຖິງບົດບາດຂອງການຄົ້ນຄວ້າຄັງຄວາມຮູ້ ທາງດ້ານນະໂຍບາຍ ແລະ ໃຫ້ຂໍ້ສັງເກດວ່າຈະຖືກລະດົມເພື່ອ "ປັບປຸງຄຸນນະພາບ ແລະ ຄວາມອາດສາມາດໃນການແຂ່ງຂັນຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້ຂອງລາວ" (ໜ້າ33).

## ການສ້າງຕັ້ງຂອງຄັງຄວາມຮູ້ທາງດ້ານນະໂຍບາຍ

ໃນປີ 2012, "ໜ້າຕານະໂຍບາຍ ຫລື ປະຕູສູ່ນະໂຍບາຍ" (Pal 2014) ໄດ້ເປີດຂຶ້ນ, ເຊິ່ງໄດ້ຊຸກຍູ້ໃຫ້ມີການນຳໃຊ້ຫຼັກຖານ ໃນຂະບວນການສ້າງນະໂຍບາຍຂອງລາວ ແລະ ເປີດໂອກາດໃຫ້ນັກຄົ້ນຄວ້າທ້ອງຖິ່ນ ໄດ້ມີໂອກາດແບ່ງປັນຂໍ້ມູນວິທະຍາສາດກັບຜູ້ວາງນະໂຍບາຍ. ໃນສະພາບການດັ່ງກ່າວ ໄດ້ມີຄວາມຮຽກຮ້ອງຕ້ອງການສູງຈາກລັດຖະບານທຸກຂັ້ນ ໃນການເຂົ້າເຖິງການແກ້ໄຂບັນຫາຕ່າງໆຢ່າງວ່ອງໄວ, ໂດຍສະເພາະແມ່ນ ປະເດັ່ນອັນສຳຄັນທີ່ເກີດຂຶ້ນຂອງການສຳປະທານທີ່ດິນຂະໜາດໃຫຍ່. ເຊິ່ງສົ່ງຜົນກະທົບເຖິງການ

ເຂົ້າເຖິງທີ່ດິນຂອງປະຊາຊົນທ້ອງຖິ່ນ, ເປັນຕົ້ນ. ການຂະຫຍາຍຕົວ ແລະ ທຳລາຍພືດ ແລະ ພາກບໍລິສັດເອກະຊົນຕ່າງໆ. ສະພາແຫ່ງຊາດ ແລະ ອົງການອື່ນໆ ໄດ້ຮຽກຮ້ອງໃຫ້ມີຄຳຕອບຕໍ່ບັນດາບັນຫານີ້ ແລະ ຍັງບໍ່ທັນມີລະບົບທີ່ຈະສະໜອງທາງເລືອກທີ່ມີຫລັກຖານ. ດັ່ງນັ້ນ, ຄັງຄວາມຮູ້ທາງດ້ານນະໂຍບາຍ ຈຶ່ງເກີດຂຶ້ນ.

ເຫັນໄດ້ຊັດເຈນວ່າ ມັນມີຄວາມຈຳເປັນຕ້ອງມີການແບ່ງເປັນສັດສ່ວນ/ແຍກການຄົ້ນຄ້ວານະໂຍບາຍໄລຍະຍາວ ທີ່ AFPRC ມີການດຳເນີນການອອກເອກະສານຄຳຮ້ອງຂໍທັນທີໂດຍຜູ້ສ້າງນະໂຍບາຍ. ມັນເປັນສິ່ງສຳຄັນ ທີ່ຈະສ້າງກົນໄກເພື່ອຊ່ວຍໃຫ້ຜູ້ສ້າງນະໂຍບາຍ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ຄູ່ຮ່ວມພັດທະນາຜູ້ໃຫ້ທຶນ, ສາມາດກຳນົດຫົວຂໍ້ທີ່ສຳຄັນ ສຳລັບການຄົ້ນຄ້ວາ ແລະ ການດຳເນີນການເຫຼົ່ານັ້ນໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງ.

ໃນເດືອນ ມິຖຸນາ ປີ 2012, ລັດຖະບານ ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ, ໄດ້ສ້າງຕັ້ງສູນຄົ້ນຄ້ວາ ຄັງຄວາມຮູ້ທາງດ້ານນະໂຍບາຍ ຂຶ້ນເປັນສ່ວນໜຶ່ງຂອງຄະນະປະຕິບັດງານ ຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ຄັງຄວາມຮູ້ທາງດ້ານນະໂຍບາຍ ຊຶ່ງໄດ້ນຳພາໂດຍ NAFRI ຜ່ານ ERDRC/AFPRC. ເພື່ອແນໃສ່ກັນສົມທົບກັບ ບັນດາກະຊວງ ແລະ ພາກເອກະຊົນ ໃນການປຶກສາຫາລື ແລະ ຊຸກຍູ້ການສ້າງຄວາມເຫັນດີເຫັນພ້ອມ ເພື່ອແກ້ໄຂບັນດາບັນຫານະໂຍບາຍຂອງຊາດ ທີ່ມີຜົນກະທົບຢູ່ລະດັບຂັ້ນແຂວງ ແລະ ເມືອງ, ເພື່ອສະໜັບສະໜູນ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທຸກຍາກໃນຂົງເຂດຊົນນະບົດ.

ຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ຮັບການສະໜັບສະໜູນໂດຍ ທ່ານ ປອ. ພວງປາຣິສັກ ປຣະວົງວຽງຄຳ, ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ປອ. ລິນຄຳ ດວງສະຫວັນ, ຮອງຫົວໜ້າ ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ທ່ານທັງສອງ ແມ່ນມີວິໄສທັດ ກ່ຽວກັບວິທີການຄົ້ນຄ້ວາຄັງຄວາມຮູ້ທາງດ້ານນະໂຍບາຍ ແລະ ສາມາດປະກອບສ່ວນເຂົ້າໃນຂະບວນການສ້າງນະໂຍບາຍກະສິກຳ ແລະ ປ່າໄມ້ (ເບິ່ງຮູບທີ1). ຊຶ່ງມັນສະແດງໃຫ້ເຫັນເຖິງການເປີດຫົວຂໍ້ທີ່ສຳຄັນໃນການສົນທະນາແຫ່ງຊາດ ກ່ຽວກັບບັນຫາທີ່ພົ້ນເດັ່ນຂຶ້ນບາງຢ່າງ (ເບິ່ງການສຶກສາຕາມພາກສ່ວນຂ້າງລຸ່ມນີ້).

ໜ້າທີ່ຫຼັກຂອງການຄົ້ນຄ້ວາ ຄັງຄວາມຮູ້ທາງດ້ານນະໂຍບາຍ ແມ່ນໃຫ້ຄຳແນະນຳດ້ານນະໂຍບາຍ ທີ່ອີງໃສ່ຫຼັກຖານຕົວຈິງ ເພື່ອສະໜັບສະໜູນການສ້າງນະໂຍບາຍ ແລະ ຍຸດທະສາດ. ເຖິງຢ່າງໃດກໍ່ຕາມ,

ຕາມແບບແຜນທີ່ໄດ້ອະທິບາຍຂ້າງລຸ່ມນີ້ ແມ່ນບໍ່ໄດ້ປະຕິບັດຕາມຄຳສັ່ງຂອງສະຖາບັນ ແລະ ຄວາມເປັນຈິງຂອງລຳດັບຊັ້ນ. ມັນຍັງຂາດຄວາມກະຈ່າງແຈ້ງ ກ່ຽວກັບວິທີການ ແລະ ຫຼັກຖານໄດ້ຖືກຊຸກຍູ້ 'ຍົກລະດັບ' ໂດຍສະເພາະຜ່ານຂັ້ນພະແນກ.

**ຂັ້ນທີ 1 – ກຸ່ມທີ່ປຶກສາດ້ານນະໂຍບາຍ (PAG), ລະດັບລັດຖະມົນຕີ ຫຼື ຮອງລັດຖະມົນຕີ ຕາງໜ້າໃຫ້ບັນດາກະຊວງ ໃນສາຍຂອງລັດຖະບານ ທີ່ກ່ຽວຂ້ອງກັບການກະສິກຳ ແລະ ພັດທະນາເສດຖະກິດກະສິກຳ**

- ຄຳແນະນຳກ່ຽວກັບການຂ້າມຂະແໜງ ແລະ ການລວມເຂົ້າກັນທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ພັດທະນາຊົນນະບົດ
- ແນະນຳ ແລະ ກວດກາຄືນ ນະໂຍບາຍທີ່ກ່ຽວຂ້ອງກັບຂະແໜງກະສິກຳ ແລະ ພັດທະນາຊົນນະບົດ ແລະ ການສະເໜີຂໍອະນຸມັດຈາກລັດຖະບານ.

**ຂັ້ນທີ 2 – ຄະນະກຳມະການ ພັດທະນານະໂຍບາຍກະສິກຳ (CAPD), DOPC**

- ສ້າງວາລະນະໂຍບາຍ ແລະ ກຳນົດຫົວຂໍ້ຄົ້ນຄວ້າດ້ານນະໂຍບາຍ ໃນຂະແໜງກະສິກຳ ແລະ ພັດທະນາຊົນນະບົດ
- ອຳນວຍຄວາມສະດວກໃຫ້ແກ່ການປະສານງານລະຫວ່າງຂະແໜງການໃນການສະໜັບສະໜູນການລວມກັນທາງດ້ານນະໂຍບາຍ, ເປັນກຸ່ມທີ່ປຶກສາຂ້າມຂະແໜງ.
- ກະກຽມ/ພັດທະນາ ນະໂຍບາຍໂດຍຫຍໍ້, ເອກະສານສີຂາວ ແລະ ສີຂຽວ, ບົດລາຍງານສັງເຄາະ.
- ປະຕິບັດໜ້າທີ່ເລຂານຸການຂອງ PAG.

**ຂັ້ນທີ 3 – ສູນຄົ້ນຄວ້ານະໂຍບາຍ**, NAFRI

- ການຄົ້ນຄວ້ານະໂຍບາຍ ແມ່ນດຳເນີນໄປຕາມການຮ້ອງຂໍຈາກຂັ້ນທີ 2 ແລະ ພະແນກວິຊາການອື່ນໆ.

ຖ້າຈຳເປັນ ແມ່ນໃຫ້ສະເໜີຫົວຂໍ້ຄົ້ນຄວ້ານະໂຍບາຍ

ຮູບທີ 1: ໂຄງສ້າງລວມຂອງຄັງຄວາມຮູ້ທາງດ້ານນະໂຍບາຍເພື່ອສະໜັບສະໜູນຂະບວນການສ້າງນະໂຍບາຍກະສິກຳ




**(ແຫຼ່ງຂໍ້ມູນ: ERDRC 2020)**

ໃນເບື້ອງຕົ້ນ, ການສ້າງຕັ້ງຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ຮັບການສະໜັບສະໜູນຈາກກອງທຶນສາກົນ ເພື່ອການພັດທະນາກະສິກຳ (IFAD). ສິ່ງດັ່ງກ່າວ ໄດ້ສ້າງກາລະໂອກາດໃຫ້ແກ່ການຄົ້ນຄວ້າຮ່ວມມືກັນ, ພິເສດແມ່ນລະຫວ່າງ NAFRI ກັບສະຖາບັນນະໂຍບາຍ ແລະ ຍຸດທະສາດກະສິກຳ ແລະ ພັດທະນາຊົນນະບົດ (IPSARD), ຫວຽດນາມ. IPSARD ເປັນຄັງຄວາມຮູ້ທາງດ້ານນະໂຍບາຍ ພາຍໃຕ້ກະຊວງກະສິກຳ ແລະ ພັດທະນາຊົນນະບົດ (MARD). ເປັນຫົວໜ່ວຍເອກະລາດ, ທາງດ້ານກົດໝາຍ ແລະ ທາງດ້ານການເງິນ. ໂດຍມີໜ້າທີ່ໃຫ້ຄໍາປຶກສາຫາລື, ປະເມີນຜົນຍຸດທະສາດ, ນະໂຍບາຍ, ແຜນການ, ແຜນງານ, ໂຄງການ ແລະ ດໍາເນີນການສໍາຫຼວດພື້ນຖານໃນຂະແໜງກະສິກໍາ ແລະ ພັດທະນາຊົນນະບົດ. ເພື່ອສະໜອງຂໍ້ມູນກ່ຽວກັບນະໂຍບາຍ ແລະ ຍຸດທະສາດ ກະສິກໍາ ແລະ ພັດທະນາຊົນນະບົດ, ຂໍ້ມູນການຕະຫຼາດ, ການສົ່ງເສີມການຄ້າ ແລະ ການເຊື່ອມໂຍງເສດຖະກິດສາກົນ, ບວກກັບຂໍ້ມູນຂ່າວສານດ້ານ

ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ, ການປ່ຽນແປງຂອງດິນຟ້າອາກາດໃນກະສິກຳ ແລະ ພັດທະນາຊົນນະບົດ.

IPSARD ແມ່ນມີໜ້າທີ່ເປັນຕົວແບບສຳລັບຄັງຄວາມຮູ້ທາງດ້ານນະໂຍບາຍ ແລະ ໄດ້ໃຫ້ປຶກສາ ພ້ອມທັງໃຫ້ຄຳແນະນຳ ແລະ ການພັດທະນາຄວາມສາມາດໃນທົ່ວຂົງເຂດທີ່ສຳຄັນ. ນອກຈາກນີ້, ຍັງໄດ້ສ້າງຄວາມເຊື່ອໝັ້ນທາງດ້ານສັງຄົມ ແລະ ດ້ານການເມືອງ ແລະ ຄວາມໜ້າເຊື່ອຖື ໃຫ້ແກ່ຄັງຄວາມຮູ້ທາງດ້ານນະໂຍບາຍ ເນື່ອງຈາກວ່າມັນເປັນຄັງສະໝອງທີ່ໄດ້ຮັບການພິສູດແລ້ວໃນ ສສ ຫວຽດນາມ.

ຄະນະຈັດຕັ້ງປະຕິບັດການຄົ້ນຄວ້າຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ເຮັດວຽກໂດຍຜ່ານຄະນະກຸ່ມເຮັດວຽກຂອງຂະແໜງກະສິກຳ (SWG) ທີ່ປະກອບດ້ວຍກຸ່ມເຮັດວຽກພາກສ່ວນຫຍ່ອຍຕ່າງໆຄື (ປ່າໄມ້, ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ທຸລະກິດກະສິກຳ, ຊົນລະປະທານ, ກະສິກຳ ແລະ ພັດທະນາຊົນນະບົດ). ທັງຂະແໜງການ ແລະ ກຸ່ມຂະແໜງການຫຍ່ອຍ. ໄດ້ກຳນົດຄຳຖາມ ຄົ້ນຄວ້າຕົ້ນຕໍ ໂດຍຜ່ານຂະບວນການຕາມຄວາມຕ້ອງການທີ່ຂັບເຄື່ອນ. ຈຸດປະສົງ, ໃນຂັ້ນຕອນນີ້, ບັນດາຂະແໜງ ການຈາກກະຊວງອື່ນໆ ຈຳເປັນຕ້ອງມີສ່ວນຮ່ວມ ເພື່ອໃຫ້ແນ່ໃຈວ່າມີການປະສານງານ ແລະ ຫຼີກເວັ້ນບໍ່ໃຫ້ເກີດການຄົ້ນຄວ້າຊ້ຳຊ້ອນ. ຄຳຖາມຄົ້ນຄ້ວາໄດ້ຖືກນຳສະເໜີຢູ່ໃນກອງປະຊຸມ ວຽກງານກະສິກຳ ແລະ ພັດທະນາຊົນນະບົດ. ລາຍການສຸດທ້າຍໄດ້ຮັບການອະນຸມັດ. ຈາກນັ້ນ, ຈຶ່ງມີການວາງແຜນການຄົ້ນຄວ້າໄດ້ມີການວາງແຜນການ ແລະ ງົບປະມານທີ່ຈັດສັນໂດຍຜູ້ໃຫ້ທຶນ.

ມີການຄາດຄະເນໄວ້ວ່າ ກຸ່ມນັກຄົ້ນຄວ້າ ຄັງຄວາມຮູ້ທາງດ້ານນະໂຍບາຍຜ່ານ PRC ຈະມີບົດບາດອຳນວຍຄວາມສະດວກໃນຂະບວນການນີ້. ໂດຍນຳເອົາບັນດາກະຊວງ, ສູນຄົ້ນຄວ້າ ແລະ ຄູ່ຮ່ວມພັດທະນາຕ່າງໆເພື່ອມາເຮັດວຽກຮ່ວມກັນໃນປະເດັນບັນຫາບູລິມະສິດ. ດັ່ງທີ່ສະແດງຢູ່ໃນຮູບທີ 2, ບໍ່ໄດ້ຖືກຄາກຄະເນວ່າເປັນສະຖາບັນໃນຂັ້ນຕອນນີ້, ແຕ່ເປັນເຄືອຂ່າຍທີ່ດຶງດູດຊັບພະຍາກອນ ຈາກອົງການຈັດຕັ້ງ ແລະ ສະຖາບັນຕ່າງໆ, ລວມທັງ: ຄະນະວິຊາການຂອງມະຫາວິທະຍາໄລແຫ່ງຊາດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ (NIER) ແລະ ສູນຄົ້ນຄວ້ານະໂຍບາຍການພັດທະນາ (CDPR). ຄູ່ຮ່ວມງານຂອງຜູ້ໃຫ້ທຶນ ແລະ ສະຖາບັນຄົ້ນຄ້ວາສາກົນໄດ້ສະໜັບສະໜູນຄວາມພະຍາຍາມໃນການຄົ້ນຄ້ວາ ພ້ອມທັງ ໃຫ້ຄຳປຶກສາ ແລະ ຄຳແນະນຳຮ່ວມກັນ.

### ຮູບພາບ 2: ເຄືອຂ່າຍການຄົ້ນຄ້ວາ ແລະ ການຮ່ວມມື




**(Source: ERDRC 2020)**

ໃນປີ 2014-2020, ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງສະວິດ (SDC), ໄດ້ໃຫ້ການສະໜັບສະໜູນທາງດ້ານວິຊາການເພີ່ມເຕີມ ຈາກສູນການຄົ້ນຄ້ວາຮ່ວມມືສາກົນ (CIRAD), ໄດ້ຮັບການສະໜັບສະໜູນຂໍ້ລິເລີ່ມສ້າງຂີດຄວາມສາມາດ ທີ່ມີຊື່ວ່າ ການຄົ້ນຄວ້າສ້າງຄວາມເຂັ້ມແຂງ ເພື່ອການພັດທະນານະໂຍບາຍກະສິກຳ. ໃນລະຫວ່າງໄລຍະສຸດທ້າຍຂອງໂຄງການ (ເດືອນກໍລະກົດ 2017-ທັນວາ 2020), ທີມນັກຄົ້ນຄວ້າຈາກຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ດຳເນີນການສຶກສາ ສະຫຼຸບໃນເອກະສານສະບັບນີ້. ຊຶ່ງແມ່ນທຶນຫຼັກທີ່ໄດ້ສະໜອງໃຫ້ພ້ອມກັບການສະໜັບສະໜູນທາງດ້ານເຕັກນິກ ແລະ ການປະສານງານໂຄງການ.

ພາກສ່ວນໜຶ່ງທີ່ສຳຄັນຂອງຂະບວນການແມ່ນ ການສ້າງຂີດຄວາມສາມາດ, ການໃຫ້ຄຳປຶກສາ ແລະ ໃຫ້ຄຳແນະນຳ. ນັກຄົ້ນຄວ້າໄດ້ມີໂອກາດເຂົ້າຮ່ວມເຄືອຂ່າຍຄັງຄວາມຮູ້/ຄັງປັນຍາ ໃນລະດັບພາກພື້ນ. ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການ IFAD. ນອກຈາກນັ້ນ, ນັກຄົ້ນຄວ້າຈາກໂຄງການ IRD, IWMI, SEI ແລະ CIRAD ຍັງໄດ້ສະໜອງການສ້າງຄວາມອາດສາມາດ ແລະ ການຝຶກອົບຮົມອີກດ້ວຍ. ນັກຄົ້ນຄວ້າໄດ້ປັບປຸງທັກສະການຄົ້ນຄວ້າ, ການວິເຄາະ, ການຂຽນ ແລະ ການນຳສະເໜີຂອງພວກເຂົາ. ນອກຈາກນັ້ນ, ຍັງມີການສ້າງຄວາມອາດສາມາດໃຫ້ນັກບໍລິຫານລະດັບສູງ ໃນລະບົບການຄົ້ນຄວ້າ ແລະ ໃນລະດັບການສ້າງນະໂຍບາຍ ກໍມີຄວາມສຳຄັນຄືກັນ. ຊຶ່ງຜ່ານການຈັດຕັ້ງປະຕິບັດການເຮັດວຽກງານຕົວຈິງ ໂດຍຜ່ານການຢ້ຽມຢາມພາກສະໜາມ, ການສົນທະນາ ແລະ ເວທີສາກົນ.

ໃນປີ 2017, ກົມນະໂຍບາຍ ແລະ ນິຕິກຳ (DOPLA) ໄດ້ຖືກສ້າງຕັ້ງຂຶ້ນ ໂດຍກະຊວງກະສິກຳ ແລະ ປ່າໄມ້. ໂດຍມີພະນັກງານຈຳນວນຫຼວງຫຼາຍທີ່ຖືກຍົກຍ້າຍຈາກ ສູນຄົ້ນຄ້ວາເສດຖະກິດກະສິກຳ ແລະ ນະໂຍບາຍ ຈາກສະຖາບັນຄົ້ນຄ້ວາກະສິກຳ,ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ຈາກຫນ່ວຍງານອື່ນໆອີກ ໄປຫາ ກົມໃຫມ່ຄືກົມນະໂຍບາຍ ແລະ ນິຕິກຳ. ໃນປີ 2019, NAFRI ໄດ້ປ່ຽນຊື່ ສູນຄົ້ນຄ້ວາເສດຖະກິດກະສິກຳ ແລະ ນະໂຍບາຍ ມາເປັນສູນຄົ້ນຄວ້າເສດຖະກິດ ແລະ ພັດທະນາຊົນນະບົດ. ຈຶ່ງເຮັດໃຫ້ການຄົ້ນຄ້ວານະໂຍບາຍ ທີ່ເປັນວຽກຫຼັກນັ້ນຖືກມອງຂ້າມ ແລະ ເຮັດໃຫ້ການຄົ້ນຄວ້ານະໂຍບາຍທີ່ສຳຄັນນັ້ນຫຼຸດລົງ. ພາຍໃນປີ 2020, ກຸ່ມນັກຄົ້ນຄວ້ານະໂຍບາຍລຸ້ນທຳອິດທີ່ໄດ້ຮັບການຝຶກອົບຮົມຕັ້ງແຕ່ປີ2003 ໄດ້ຖືກຍົກຍ້າຍໄປຫາພາກສ່ວນຕ່າງໆ, ລວມທັງ DOPLA. ຈຶ່ງເຮັດໃຫ້ NAFRI ຂາດຊັບພະຍາກອນມະນຸດ ທີ່ຈຳເປັນ ເພື່ອຄົ້ນຄວ້າຄັງຄວາມຮູ້ທາງດ້ານນະໂຍບາຍ ແລະ ສິ້ນສຸດການສະໜອງທຶນຈາກຜູ້ໃຫ້ທຶນຂອງໂຄງການ SDC ໃນປີ 2020, ຈຶ່ງເຮັດໃຫ້ການຄົ້ນຄວ້າຄັງຄວາມຮູ້ທາງດ້ານນະໂຍບາຍ ຢຸດເຊົາການດຳເນີນການຄົ້ນຄ້ວາທີ່ສຳຄັນໃດໆ ແລະ ມາຮອດ ປີ 2022, DOPLA ໄດ້ຖືກຍຸບເລີກ.

## ຜົນໄດ້ຮັບ ແລະ ຜົນຕອບຮັບ

ໂດຍລວມແລ້ວ ຄັງຄວາມຮູ້ທາງດ້ານນະໂຍບາຍທັງໝົດ, ໄດ້ດຳເນີນການສຶກສາກ່ຽວກັບນະໂຍບາຍປະມານ 20 ບົດ (ເບິ່ງເອກະສານຊ້ອນທ້າຍ1). ການຄົ້ນຄ້ວາເຫຼົ່ານີ້ ແມ່ນໄດ້ດຳເນີນການໂດຍເຄືອຂ່າຍຂອງນັກຄົ້ນຄວ້າ ທີ່ເປັນຕົວແທນສະມັກໃຈ ແລະ ໃຫ້ຄວາມສົນໃຈ ເພື່ອຂັບເຄື່ອນນະໂຍບາຍ. ຊຶ່ງລວມເຖິງ ການຄົ້ນຄວ້າກ່ຽວກັບສິນຄ້າສະເພາະ ເຊັ່ນ: ສິນຄ້າເພື່ອການຄ້າ (ກ້ວຍ ແລະມັນຕົ້ນ) ລວມເຖິງການສຶກສາ ຕະຫຼາດສະເພາະກຸ່ມກ່ຽວກັບການຜະລິດນ້ຳມັນຍາງ ແລະ ການຜະລິດຊາ. ຍັງມີການສຶກສາກໍລະນີອື່ນໆ ໃນຂະແຫນງການຫຍ່ອຍຂອງການລ້ຽງສັດ ແລະ ການລ້ຽງສັດນ້ຳ. ນອກຈາກນັ້ນ, ຍັງມີການສຶກສາບັນຫາປະເດັນຕ່າງໆ ຈຳນວນຫນຶ່ງໄດ້ຖືກດຳເນີນການກ່ຽວກັບສັນຍາພັນທະກະສິກຳ, ການປະກັນໄພກະສິກຳ ແລະ ການສ້າງຄວາມເຂັ້ມແຂງບົດບາດຍິງ-ຊາຍ ນຂະແຫນງກະສິກຳ. ການຄົ້ນຄ້ວາປະເພດສຸດທ້າຍແມ່ນ ສຸມໃສ່ການພັດທະນາຍຸດທະສາດເຊັ່ນ: ຍຸດທະສາດການເຕີບຕົວສີຂຽວ ແລະ ການຄ້າທາງການກະສິກຳ. ນີ້ເປັນກຸນແຈອັນສຳຄັນ ເພາະມັນຊີ້ບອກເຖິງບັນດາບັນຫາທີ່ກວ້າງຂວາງ ແລະ ບັນຫາທີ່ຂະແຫນງກະສິກຳຂອງລາວ ພວມປະເຊີນໜ້າເຊິ່ງໄດ້ອະທິບາຍເຖິງຄວາມຊັບຊ້ອນ, ຫຼາກຫຼາຍ ແລະ ຫຼາຍມິຕິລະດັບ (Sonethavixay 2020).

ໃນປີ 2020, "ມີການສ້າງຖານຫຼັກຖານສໍາລັບການກໍານົດນະໂຍບາຍ ໃນຂະແໜງກະສິກໍາ ແລະ ພັດທະນາຊົນນະບົດ ໃນ ສປປລາວ" ສະເໜີພາບລວມຂອງຜົນການຄົ້ນຄວ້າ ກ່ຽວກັບບາງຫົວຂໍ້ຕົ້ນຕໍທີ່ໄດ້ຄົ້ນຄວ້າ ມີສາມກໍລະນີ ພ້ອມທັງ ຜົນກະທົບຂອງພວກມັນ, ແມ່ນໄດ້ສະຫຼຸບໂດຍຫຍໍ້ຂ້າງລຸ່ມນີ້.

## ຜົນໄດ້ຮັບທີ່ສໍາຄັນ

### ການຄົ້ນຄວ້າໄດ້ນໍາໄປສູ່ການປ່ຽນແປງນະໂຍບາຍ ແລະ ການຈັດຕັ້ງປະຕິບັດ

ຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ຖືກສ້າງຕັ້ງຂຶ້ນເພື່ອສະໜອງຫຼັກຖານກ່ຽວກັບ ຫົວຂໍ້ທີ່ສໍາຄັນ ແລະ ການປ່ຽນແປງ ຫຼື ມີອິດທິພົນໃນການຕັດສິນໃຈ ຊຶ່ງນະໂຍບາຍດັ່ງຕົວຢ່າງຂ້າງລຸ່ມນີ້ ຊີ້ໃຫ້ເຫັນວ່າ, ການຄົ້ນຄວ້າຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ນໍາໄປສູ່ການປ່ຽນແປງຈໍານວນໜຶ່ງ ທີ່ສາມາດແບ່ງອອກເປັນສາມປະເພດ ຄື:

- ປັບປຸງຄວາມເຂົ້າໃຈກ່ຽວກັບປະເດັນ ແລະ ບັນຫາ ໂດຍຜູ້ກໍານົດນະໂຍບາຍ, ຄູ່ຮ່ວມບໍລິຈາກ ແລະ ຜູ້ປະຕິບັດທາງດ້ານການພັດທະນາ. ການຄົ້ນຄວ້າສ່ວນໃຫຍ່ໄດ້ປະກອບສ່ວນເຂົ້າໃນພື້ນຖານຄວາມຮູ້ ແລະ ການສົນທະນາ ທີ່ມີຂໍ້ມູນຫຼັກຖານ.
- ສົ່ງຜົນເຮັດໃຫ້ລັດຖະບານ ໄດ້ປະຕິບັດການສ້າງຕັ້ງກຸ່ມກວດກາດູແລໃຫມ່ ຫຼື ດໍາເນີນການສືບສວນ ໃນກໍລະນີຂອງການປູກຫມາກກ້ວຍເພື່ອເປັນສິນຄ້າ, ມັນສົ່ງຜົນເຮັດໃຫ້ສາມາດລະງັບພື້ນທີ່ປູກກ້ວຍໃນແຫ່ງໃຫມ່.
- ມີອິດທິພົນຕໍ່ນະໂຍບາຍໃໝ່ ເຊັ່ນ ກໍລະນີນະໂຍບາຍການເຕີບໂຕສີຂຽວ.

### ການປະຕິດບັດວາລະການຄົ້ນຄວ້າຮ່ວມກັນທີ່ຖືກຂັບເຄື່ອນໂດຍຜູ້ຕັດສິນໃຈຈາກລັດຖະບານ ແລະ ຄູ່ຮ່ວມງານຂອງຜູ້ໃຫ້ທຶນ

ຜົນໄດ້ຮັບໃນເຊີງບວກອີກປະການຫນຶ່ງຂອງຂະບວນການນີ້ແມ່ນ ການສ້າງວາລະການຄົ້ນຄວ້າຮ່ວມກັນທີ່ຖືກຂັບເຄື່ອນໂດຍຜູ້ມີອໍານາດໃນການຕັດສິນໃຈ ໂດຍຜ່ານເວທີປຶກສາຫາລືທີ່ມີຢູ່ແລ້ວ ເຊັ່ນເວທີຂອງ (ຄະນະປະຕິບັດງານກ່ຽວກັບຂະແໜງກະສິກໍາ ແລະ ພັດທະນາຊົນນະບົດ.) ມັນໄດ້ເຮັດໃຫ້ການປະສານງານມີປະສິດທິພາບຫຼາຍຂຶ້ນ ແລະ ເຮັດໃຫ້ການກໍານົດລໍາດັບບຸລິມະສິດຄວາມສໍາຄັນທີ່ຊັດເຈນ. ຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ນໍາໃຊ້ວິທີການ 'ນາຍຫນ້າຄວາມຮູ້', ຈັບຄູ່ຄວາມຕ້ອງການຂອງຜູ້ສ້າງ

ນະໂຍບາຍ ກັບຊ່ອງຫວ່າງຄວາມຮູ້ເພື່ອສ້າງວາລະການຄົ້ນຄວ້າທີ່ຈັດເຈນ. ນອກຈາກນີ້, ຍັງເປີດໂອກາດໃຫ້ມີພື້ນທີ່ຊ່ອງຫວ່າງ ສໍາລັບບັນຫາທີ່ເກີດຂື້ນທີ່ຈໍາເປັນຕ້ອງໄດ້ຮັບການແກ້ໄຂທັນທີທັນໃດ.

ຄັງຄວາມຮູ້ທາງດ້ານນະໂຍບາຍ ຍັງຜ່ານຂະແໜງກະສິກໍາ ແລະ ຄະນະປະຕິບັດວຽກງານຂອງບັນດາຂະແໜງການຫຍ່ອຍ ເພື່ອໃຫ້ໄດ້ມີການສ້າງກົນໄກໃນການສະໜອງທຶນສະໜັບສະໜູນໃນການຄົ້ນຄວ້າຢ່າງເປັນທາງການ. ນອກຈາກນີ້, ໃນປັດຈຸບັນ ມີເວທີທີ່ໄດ້ຮັບການຍອມຮັບສໍາລັບປະເດັນບັນຫາຕ່າງໆທີ່ຈະນໍາສະເໜີ ແລະ ປຶກສາຫາລື.

## ການພັດທະນາຂີດຄວາມສາມາດ ແລະ ຊ່ອງຫວ່າງສໍາລັບການຄົ້ນຄວ້າເລື່ອງນະໂຍບາຍທີ່ອີງໃສ່ຫຼັກຖານ

ຜົນໄດ້ຮັບທີ່ສໍາຄັນອີກປະການໜຶ່ງ ບໍ່ພຽງແຕ່ການສ້າງຄວາມເຂັ້ມແຂງ ແລະ ການສ້າງຂີດຄວາມຮູ້ຄວາມສາມາດຂອງບັນດານັກຄົ້ນຄ້ວາເທົ່ານັ້ນ, ແຕ່ຍັງລວມເຖິງຜູ້ສ້າງນະໂຍບາຍ ໃນການດໍາເນີນການຄົ້ນຄວ້ານະໂຍບາຍທີ່ອີງໃສ່ຫຼັກຖານ. ດ້ວຍການສ້າງພື້ນສໍາລັບນັກຄົ້ນຄວ້າ ໃຫ້ໄດ້ມີໂອກາດໃນການຄົ້ນຄ້ວາ ເພື່ອກວດສອບ ແລະ ເຜີຍແຜ່ໃນຫົວຂໍ້ທີ່ລະອຽດອ່ອນເຊັ່ນ: ຄົ້ນຄ້ວາຫົວຂໍ້ກ່ຽວກັບການສໍາປະທານທີ່ດິນ, ສັນຍາກະສິກໍາ, ການປະກັນໄພກະສິກໍາ ແລະ ຂໍ້ສະເໜີແນະນໍາດ້ານນະໂຍບາຍ ແມ່ນຖືວ່າເປັນເລື່ອງໃຫມ່ທັງໝົດພາຍໃນລະບົບຂອງ ສ ປປ ລາວ. ມັນຍັງເຫັນໄດ້ຈັດເຈນວ່າ ຂະບວນການຄົ້ນຄວ້ານະໂຍບາຍຍັງຂາດການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ກຸ່ມຊາວກະສິກອນ, ກຸ່ມຊົນເຜົ່າພື້ນເມືອງ ແລະ ແມ່ຍິງ, ມັກຈະບໍ່ມີໂອກາດອອກສິດສຽງທີ່ເຂັ້ມແຂງໃນຂະບວນການສ້າງນະໂຍບາຍ. ການໃຫ້ໂອກາດສໍາລັບພວກເຂົາໃນການເຂົ້າຮ່ວມຂະບວນການຄົ້ນຄວ້າຕະຫຼອດຮອດການສົ່ງເສີມ ການສົນທະນາຈະມີຄວາມສໍາຄັນໃນອະນາຄົດ.

ພະນັກງານ ຂອງພາກລັດ ມີຄວາມເຄື່ອນເຫນັງສູງ ແລະ ຖືກຍ້າຍຫຼາຍຄັ້ງ ແລະ ຈະຖືກຍ້າຍໄປຮັບໜ້າທີ່ ແລະ ຕໍາແຫນ່ງໃຫມ່ເລື້ອຍໆ ທີ່ ສະຖາບັນໃຫມ່. ຜົນໄດ້ຮັບທີ່ຕາມມາຄື ຂາດຄວາມຍືນຍົງພາຍໃນສະຖາບັນ, ເຊັ່ນດຽວກັນກັບການສູນເສຍຄວາມຊົງຈໍາຂອງສະຖາບັນ. ໃນກໍລະນີນີ້, ພະນັກງານທີ່ເປັນບຸກຄົນທີ່ສໍາຄັນຈະຖືກຍົກຍ້າຍໄປສະຖາບັນອື່ນໆ.

## ຈຸດພົ້ນເດັ່ນຂອງການຄົ້ນຄວ້ານະໂຍບາຍ

ຄັງຄວາມຮູ້ທາງດ້ານນະໂຍບາຍ ໄດ້ມີຄວາມກ້າວໜ້າທີ່ສຳຄັນທີ່ສຸດ ໃນການສ້າງຕັ້ງທີມງານຫຼັກ, ເພື່ອດຳເນີນການສຶກສາທາງດ້ານຄຸນນະພາບ ພ້ອມທັງສ້າງຄວາມສົນໃຈໃນບັນດາຄູ່ຮ່ວມພັດທະນາ ແລະ ອົງການຄົ້ນຄວ້າສາກົນ. ເພື່ອເຮັດການຄົ້ນຄວ້າຂໍ້ມູນ ນະໂຍບາຍ ແລະ ຂໍ້ມູນຜົນການຄົ້ນຄວ້າທີ່ເປັນປະໂຫຍດ ແລະ ຜະລິດຕະພັນຄວາມຮູ້ທີ່ກ່ຽວຂ້ອງກັບນະໂຍບາຍ. ການຄົ້ນຄວ້າ ແລະ ເຄື່ອງມືເຫຼົ່ານີ້ ໄດ້ໃຫ້ບໍລິການ ແລະ ຖືກນຳໃຊ້ ແລະ ຍັງຄົງສືບຕໍ່ເຮັດໜ້າທີ່ເປັນເຄື່ອງມືທີ່ເປັນປະໂຫຍດ ໃນການສະໜັບສະໜູນການວາງແຜນນະໂຍບາຍ ແລະ ຊ່ວຍໃຫ້ລະດັບການນຳຂອງລັດຖະບານ ມີການຕັດສິນໃຈທີ່ດີຂຶ້ນໃນການກຳນົດນະໂຍບາຍ. ໂດຍເນັ້ນການສະໜັບສະໜູນ ຂຸມຊົນກະສິກຳ. ເຊັ່ນຕົວຢ່າງການຄົ້ນຄ້ວາ ຂອງທີມງານນັກຄົ້ນຄວ້າ ຄັງຄວາມຮູ້ທາງດ້ານນະໂຍບາຍ ແລະ ຜົນໄດ້ຮັບຂອງຊິ່ງລວມເຖິງມີການວິເຄາະເຊີ່ງເລິກຂອງການຜະລິດກະສິກຳເປັນສິນຄ້າແບບຍືນຍົງ, ຕ່ອງໂສ້ມູນຄ່າສີຂຽວ, ການລ້ຽງງົວເປັນສິນຄ້າແບບຍືນຍົງ, ການປູກແບວພັນກ້ວຍພື້ນເມືອງເປັນສິນຄ້າຍືນຍົງ, ການປະມົງແບບຍືນຍົງ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ.

## 1. ການຜະລິດກ້ວຍເປັນສິນຄ້າໃນ ສ ປປ ລາວ

ຄູ່ຮ່ວມງານ: PRC/NAFRI ແລະ ມະຫາວິທະຍາໄລແຫ່ງຊາດ

ໃນປີ 2010 ການຜະລິດກ້ວຍ ເພື່ອການຄ້າໃນ ສປປລາວ ມີການຂະຫຍາຍຕົວຢ່າງໄວວາ. ການຂະຫຍາຍຕົວໃນເບື້ອງຕົ້ນ ແມ່ນຢູ່ເຂດພາກເຫນືອ, ແຕ່ຕໍ່ມາ ການຜະລິດກ້ວຍໄດ້ແຜ່ຂະຫຍາຍໄປຍັງເຂດພາກກາງ ແລະ ພາກໃຕ້. ການລົງທຶນສ່ວນຫຼາຍແມ່ນດຳເນີນການໂດຍ ນັກລົງທຶນ ຂອງບໍລິສັດຈາກ ສປ ຈີນ. ຍ້ອນວ່າປະເທດລາວມີເນື້ອທີ່ດິນທີ່ເໝາະສົມ ແລະ ມີສະພາບອາກາດທີ່ເອື້ອອຳນວຍໃຫ້ແກ່ການປູກກ້ວຍ. ນັກລົງທຶນຈີນກຳລັງຊອກຫາພື້ນທີ່ການຜະລິດແຫ່ງໃຫມ່ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ເພີ່ມກຳໄລສູງສຸດໃຫ້ກັບບໍລິສັດ. ຢ່າງໃດກໍ່ຕາມ, ການຜະລິດກ້ວຍ ສາມາດສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ຈຸດປະສົງ, ຂອງການສຶກສາຄັ້ງນີ້ແມ່ນເພື່ອສ້າງແນວທາງທີ່ເປັນລະບົບໃນການຜະລິດກ້ວຍເປັນການຄ້າ, ການບຸງແຕ່ງ, ການຄຸ້ມຄອງການລົງທຶນ, ມາດຕະຖານການຄັດເລືອກນັກທຸລະກິດ ແລະ ບົດບາດທີ່ເໝາະສົມສຳລັບ ໜ່ວຍງານຂອງພາກລັດ, ນັກລົງທຶນ ແລະ ຜູ້ຜະລິດ. ໂດຍອີງໃສ່ຜົນໄດ້ຮັບ, ນັກຄົ້ນຄວ້າໄດ້ສະເໜີຂໍ້ແນະນຳທາງດ້ານນະໂຍບາຍ ທັງໝົດ 13 ຂໍ້ສຳລັບການຜະລິດ/ປູກກ້ວຍເປັນການຄ້າ ຢູ່ສປປລາວ.

**ຜົນໄດ້ຮັບທີ່ສຳຄັນຈາກການສຶກສາຄັ້ງນີ້ປະກອບມີ:**

- ຜົນການຄົ້ນຄວ້າ ໄດ້ຖືກແບ່ງປັນກັບພາກສ່ວນກ່ຽວຂ້ອງ (ເຊັ່ນ: ພະແນກກະສິກຳ ແລະ ປ່າໄມ້ແຂວງ, ກະຊວງກະສກຳ ແລະ ປ່າໄມ້, ບໍລິສັດກ້ວຍ) ໃນລະຫວ່າງກອງປະຊຸມປຶກສາຫາລືດ້ານວິຊາການ ແລະ ກອງປະຊຸມ SWGARD
- ຜົນການຄົ້ນຄວ້າໄດ້ຖືກນຳສະເໜີຢູ່ໃນເວທີບາໄສກ້ວຍໂລກ ໃນປະເທດຝຣັ່ງ (2016)
- ການໂຈະ ຫຼື ຫ້າມການປູກກ້ວຍ/ສຳປະທານເນື້ອທີ່ການປູກກ້ວຍ
- ຄຳສັ່ງແນະນຳຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການລົງທຶນກະສິກຳ (ການຜະລິດກ້ວຍ)

## *2. ການສົ່ງເສີມຜະລິດກະສິກຳແບບມີຂໍ້ຜູກພັນສັນຍາ*

ຄູ່ຮ່ວມງານ: PRC/NAFRI ແລະ IPSARD/MARD, ຫວຽດນາມ

ລະບົບນະໂຍບາຍຂອງສັນຍາກະສິກຳ/ການສົ່ງເສີມຜະລິດກະສິກຳ ແບບມີຂໍ້ຜູກພັນສັນຍາ ໃນ ສ ປປ ລາວ ແມ່ນຍັງບໍ່ທັນສະໄໝ; ມີການທັບຊ້ອນກັນ ແລະ ຊ່ອງຫວ່າງໃນການຄຸ້ມຄອງການຈັດຕັ້ງປະຕິບັດການສົ່ງເສີມຜະລິດກະສິກຳແບບມີຂໍ້ຜູກພັນສັນຍາ ລະຫວ່າງກະຊວງ, ແລະ ອົງການຈັດຕັ້ງທ້ອງຖິ່ນ ຍັງບໍ່ມີຄວາມສາມາດພຽງພໍໃນການຄຸ້ມຄອງ ການເຮັດກະສິກຳ ຕາມສັນຍາໃນຂອບເຂດຂອງເຂົາເຈົ້າ. ຍັງບໍ່ມີນະໂຍບາຍສະເພາະກ່ຽວກັບການເຮັດສັນຍາໃນລາວ, ໂດຍສະເພາະເອກະສານທາງດ້ານກົດໝາຍ, ເຊິ່ງເຮັດໃຫ້ຊາວກະສິກອນ ແລະ ວິສາຫະກິດກະກຽມສັນຍາ. ກ່ອນອື່ນໝົດ, ບໍ່ມີເອກະສານທາງດ້ານກົດໝາຍສະເພາະກ່ຽວກັບ ການສົ່ງເສີມຜະລິດກະສິກຳແບບມີຂໍ້ຜູກພັນສັນຍາໃນລາວ. ສັນຍາທັງໝົດຖືກຄວບຄຸມພາຍໃຕ້ກົດໝາຍດຽວກັນໂດຍບໍ່ມີການອະທິບາຍລະອຽດກ່ຽວກັບແນວຄວາມຄິດຂອງສັນຍາກະສິກຳ. ສິ່ງດັ່ງກ່າວພາໃຫ້ເກີດຄວາມຫຍຸ້ງຍາກ ໃນການປະຕິບັດ ແລະ ການບັງຄັບໃຊ້ເນື່ອງຈາກຫຼາຍເນື້ອໃນສຳຄັນຂອງສັນຍາບໍ່ໄດ້ກຳນົດໄວ້ໃນກົດໝາຍ.

ຂາດຄຳແນະນຳທາງດ້ານວິຊາການກ່ຽວກັບຮູບແບບສັນຍາ, ແລະ ຂັ້ນຕອນການເຮັດສັນຍາ ທີ່ຄູ່ສັນຍາສາມາດອີງໃສ່. ຈຶ່ງເຮັດໃຫ້ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງກັບກະສິກຳ, ລວມທັງກຸ່ມຊາວກະສິກອນ, ວິສາຫະກິດ ແລະ ອຳນາດການປົກຄອງທ້ອງຖິ່ນມີຄວາມຮູ້ບໍ່ພຽງພໍ ແລະ ຂາດແຮງຈູງໃຈ ໃນການປະຕິບັດສັນຍາກະສິກຳຢ່າງຈິງຈັງ. ຜົນການຄົ້ນຄ້ວາມີຂໍ້ສະເໜີຄຳແນະນຳທາງດ້ານນະໂຍບາຍ: (i) ກະກຽມບົດກ່ຽວກັບສັນຍາກະສິກຳ ໃນກົດຫມາຍວ່າດ້ວຍສັນຍາ ຫຼື ສ້າງຊຸດເອກະສານນິຕິກຳ ທີ່ແຕກຕ່າງກັນກ່ຽວກັບການກະສິກຳສັນຍາ, (ii) ປັບປຸງການຈັດລຽງຂອງສະຖາບັນທີ່ກ່ຽວຂ້ອງກັບກະສິກຳສັນຍາ, (iii) ລວມອົງການຈັດຕັ້ງຊາວກະສິກອນ, (iv) ສົ່ງເສີມວິສາຫະກິດພາຍໃນປະເທດ, (v) ພັດທະນາວິໄສທັດຕະຫຼາດກະສິກຳ, (vi) ເສີມຂະຫຍາຍຄຸນຄ່າຂອງສັງຄົມ ແລະ ນຳໃຊ້ກົນໄກຂອງຊຸມຊົນ.

**ບາງສ່ວນຂອງຜົນໄດ້ຮັບທີ່ສຳຄັນຈາກການສຶກສາປະກອບມີ:**

- ຜົນການຄົ້ນຄວ້າໄດ້ຖືກແບ່ງປັນກັບພາກສ່ວນກ່ຽວຂ້ອງ (ເຊັ່ນ: ພະແນກກະສິກຳ ແລະ ປ່າໄມ້ແຂວງ, ກະຊວງກະສິກຳ ແລະ ປ່າໄມ້, ຊາວກະສິກອນ) ໃນລະຫວ່າງກອງປະຊຸມປຶກສາຫາລືດ້ານວິຊາການ, SWGARD, ຄະນະປະຕິບັດງານຄຸ້ມ ຄອງທີ່ດິນກະສິກຳ.
- ກະຊວງກະສິກຳ ແລະ ປ່າໄມ້ ສ້າງຕັ້ງຄະນະປະຕິບັດງານກ່ຽວກັບສັນຍາກະສິກຳ
- ການສ້າງແຜນທີ່ເສັ້ນທາງກະສິກຳແບບສັນຍາໃນປີ 2019

- ສະເໜີໂຄງການເພື່ອສະໜອງທຶນຂອງລັດຖະບານ (PCAP) ໂຄງການ3 ປີ ເພື່ອຈັດຕັ້ງປະຕິບັດແຜນຜັງເສັ້ນທາງ ດໍາລັດວ່າດ້ວຍການປູກຝັງຕາມສັນຍາກໍາລັງຖືກສ້າງຂຶ້ນໂດຍ ກະຊວງກະສິກໍາ ແລະ ປ່າໄມ້.

### *3. ການເຂົ້າເຖິງເງິນກູ້ຢືມຂອງຊາວກະສິກອນ*

ຄູ່ຮ່ວມງານ: ສູນຄົ້ນຄວ້າເສດຖະກິດ ແລະ ພັດທະນາຊົນນະບົດ ຂອງ ສກປຜ ແລະມະຫາວິທະຍາໄລແຫ່ງຊາດ

ມີຄວາມຕ້ອງການເພີ່ມຂຶ້ນໃນການລົງທຶນ ເພື່ອການພັດທະນາທາງດ້ານກະສິກໍາ. ການສະໜັບສະໜູນດ້ານການເງິນ ແລະ ການເຂົ້າເຖິງການເງິນ ສາມາດສ້າງຄວາມເຂັ້ມແຂງ ເພື່ອຊ່ວຍໃຫ້ຊາວກະສິກອນເພີ່ມຄວາມຮັ່ງມີຂອງເຂົາເຈົ້າ ແລະ ຍັງປັບປຸງຄວາມສາມາດໃນການລ້ຽງດູປະຊາກອນ. ຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບການສະໜັບສະໜູນທາງດ້ານການເງິນທີ່ມີຢູ່ໃນທ້ອງຖິ່ນ ອາດມີສ່ວນຊ່ວຍຢ່າງໃຫຍ່ຫຼວງເຂົ້າໃນການພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດການເງິນກະສິກໍາ ແລະ ເຄື່ອງມືທາງການເງິນເພື່ອເສີມຂະຫຍາຍ ການເຂົ້າເຖິງການບໍລິການທາງດ້ານການເງິນທີ່ເໝາະສົມ ຂອງຊາວກະສິກອນ ແລະວາງຍຸດທະສາດການຫຼຸດຜ່ອນຄວາມສ່ຽງ. ການສຶກສາຄັ້ງນີ້ ມີຈຸດປະສົງ ເພື່ອປະເມີນຄວາມຕ້ອງການທາງດ້ານການເງິນຕົ້ນຕໍ ຂອງຊາວກະສິກອນຂະໜາດນ້ອຍ, ເພື່ອສຶກສາຂະບວນການເຂົ້າເຖິງສິນເຊື່ອ, ກໍານົດປັດໄຈທີ່ກໍານົດການເຂົ້າເຖິງສິນເຊື່ອ ຂອງຊາວກະສິກອນ, ວິເຄາະຄວາມສ່ຽງດ້ານສິນເຊື່ອ, ແລະກໍານົດກົນໄກຊ່ວຍໜູນ ຂອງຊາວກະສິກອນ. ຊ່ວຍໃຫ້ເຂົາເຈົ້າຟື້ນຕົວຈາກຜົນກະທົບຂອງໄພພິບັດ. ສະເໜີຂໍ້ແນະນໍາດ້ານນະໂຍບາຍ ກ່ຽວກັບຄວາມຮູ້ດ້ານການເງິນ, ສົ່ງເສີມກຸ່ມການຜະລິດຊາວກະສິກອນ, ການສຶກສາຄວາມເປັນໄປໄດ້ກ່ຽວກັບການປະກັນໄພການປູກພືດ, ແລະ ການສ້າງຕັ້ງກອງທຶນປົກປ້ອງໄພພິບັດ.

ບາງສ່ວນຂອງຜົນໄດ້ຮັບທີ່ໄດ້ຈາກການສຶກສາ:

- ຜົນການຄົ້ນຄວ້າໄດ້ຖືກແບ່ງປັນກັບພາກສ່ວນກ່ຽວຂ້ອງ (ເຊັ່ນ: ບັນດາພະແນກ, MAF, ທະນາຄານກາງ) ໃນກອງປະຊຸມປຶກສາຫາລືດ້ານວິຊາການ, ວຽກງານການເງິນຊົນນະບົດ, ກອງປະຊຸມSSWGRD

- ຜົນການຄົ້ນຄວ້າໄດ້ຖືກນໍາສະເໜີໃນກອງປະຊຸມຄົ້ນຄວ້າແຫ່ງຊາດ ທີ່ມະຫາວິທະຍາໄລແຫ່ງຊາດ.

## *4. ການວິເຄາະນະໂຍບາຍ ແລະ ສະຖາບັນກະສິກໍາແບບຍືນຍົງ ແລະ ສີຂຽວໃນສປປລາວ*

ຄູ່ຮ່ວມງານ: ສະຖາບັນສິ່ງແວດລ້ອມ Stockholm, TABI, FAO ແລະ ກົມນະໂຍບາຍ ແລະ ນິຕິກໍາ

ຂະແໜງກະສິກໍາ ໃນ ສ ປປ ລາວ ກໍຄືກັນກັບທຸກປະເທດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ຕ້ອງໄດ້ປັບຕົວໃນຫຼາຍດ້ານ ເນື່ອງຈາກການປ່ຽນແປງທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ ທີ່ວ່ອງໄວ. ໄດ້ມີການກົດດັນໃຫ້ຫຼຸດຜ່ອນ ພາລະດ້ານສິ່ງແວດລ້ອມຂອງຂະແໜງທີ່ດິນ, ນໍ້າ ແລະ ຊີວະນາງພັນ, ລວມທັງຜົນກະທົບຕໍ່ສຸຂະພາບຂອງມະນຸດ. ນັບແຕ່ປະເທດຊາດ ໄດ້ຮັບການປົດປ່ອຍ ໃນປີ 1975 ເປັນຕົ້ນມາ, ຍຸດທະສາດ ແລະ ນະໂຍບາຍກະສິກໍາ ທີ່ໄດ້ວາງອອກໂດຍ ກະຊວງກະສິກໍາ ແລະ ປ່າໄມ້ ແມ່ນອີງໃສ່ການເພີ່ມທະວີການຜະລິດເພື່ອບັນລຸເປົ້າໝາຍທີ່ບໍ່ເປັນຈິງ, ໂດຍອີງໃສ່ການນໍາໃຊ້ທາດເຄມີ ແລະກົນໄກຢ່າງຕັ້ງໜ້າ. ການຄົ້ນຄວ້າທີ່ດໍາເນີນໂດຍທີມງານຈາກ ກະຊວງກະສິກໍາ ແລະ ປ່າໄມ້, ເປີດເຜີຍວ່າເປົ້າຫມາຍການຜະລິດຂອງປະເທດແມ່ນບໍ່ສາມາດບັນລຸໄດ້. ອັນທີໜຶ່ງແມ່ນຍ້ອນສະພາບພູມສາດທາງຊີວະພາບຂອງມັນ, ແລະ ອັນທີສອງແມ່ນຍ້ອນຜູ້ຜະລິດ ບໍ່ສາມາດເຂົ້າເຖິງພື້ນຖານໂຄງລ່າງທີ່ສໍາຄັນລວມທັງການເກັບຮັກສາ, ຊົນລະປະທານ, ເຄືອຂ່າຍຖະໜົນຫົນທາງ ແລະ ຕະຫຼາດທີ່ສະເໝີພາບ. ນອກຈາກນັ້ນ, ການຜະລິດກະສິກໍາຂອງ ສປປລາວ ຍັງບໍ່ສາມາດແຂ່ງຂັນກັບໄທ, ຈີນ ຫຼື ຫວຽດນາມ ໃນດ້ານການຜະລິດເປັນຈໍານວນຫຼາຍໄດ້, ຊຶ່ງໝາຍຄວາມວ່າ ລາຄາສິນຄ້າທີ່ຜະລິດຢູ່ລາວ ຄົງຈະຕົກຕໍ່າລົງຈາກປະເທດເພື່ອນບ້ານຫຼາຍກວ່າເກົ່າ.

ບາງສ່ວນຂອງຜົນໄດ້ຮັບຈາກການສຶກສາປະກອບມີ:

- ຜົນການຄົ້ນຄວ້າໄດ້ຖືກແບ່ງປັນກັບພາກສ່ວນທີ່ກ່ຽວຂ້ອງໃນກອງປະຊຸມປຶກສາຫາລືດ້ານວິຊາການ, SSWGAgroBio, SWGARD
- ໄດ້ຈັດຕັ້ງເວທີປາໄສພາກພື້ນກ່ຽວກັບກະສິກໍາສີຂຽວ ແລະ ຍືນຍົງ
- ໃນເດືອນ ມິຖຸນາ 2021, MAF ໄດ້ຜ່ານກອບວຽກງານກະສິກໍາສີຂຽວ ແລະ ຍືນຍົງ 2030 ສໍາລັບສປປລາວ.

## ບົດຮຽນທີ່ຖອດຖອນໄດ້

ໃນຂະບວນການຕັດສິນໃຈທາງດ້ານຄວາມຮູ້ ມັກຈະແຂ່ງຂັນກັບວາລະທາງດ້ານການເມືອງ. ດັ່ງທີ່ພະນັກງານບໍານານທ່ານໜຶ່ງເວົ້າວ່າ: ເຫດຜົນຫຼັກຂອງຄວາມສໍາເລັດ ຫຼື ທີ່ເຮັດໃຫ້ສໍາເລັດ ກໍຄືການໄດ້ຮັບຄົນທີ່ເໝາະສົມ ແລະ ມີຄວາມຮູ້ ຄວາມສາມາດເຂົ້າມາ, ແລະ ກໍ່ສ້າງສິ່ງນັ້ນຂຶ້ນມາ. ນອກຈາກນັ້ນ, ສິ່ງທີ່ສໍາຄັນທີ່ສຸດຄື ຕ້ອງຖາມຄໍາຖາມທີ່ຖືກຕ້ອງ ແລະ ດໍາເນີນການຄົ້ນຄວ້າເພື່ອແກ້ໄຂບັນຫາທີ່ກົງກັບຄວາມຕ້ອງການ. ນໍາໃຊ້ຜົນການຄົ້ນຄວ້າ ແລະ ຄັງຄວາມຮູ້ທາງດ້ານນະໂຍບາຍ ເປັນຄັງບັນຍາ ບ່ອນທີ່ສິ່ງຕ່າງໆ ສາມາດເຂົ້າມາ ແລະ ອອກໄດ້.

### ການປັບປຸງຮູບແບບໃຫ້ເປັນສະຖາບັນ

ເຫັນໄດ້ຈັດເຈນແລ້ວວ່າ ກຸ່ມນັກຄົ້ນຄວ້ານະໂຍບາຍ ໄດ້ຮັບການຝຶກອົບຮົມໃນໄລຍະເວລາ 10 ປີ. ແຕ່ເຖິງຢ່າງໃດກໍຕາມ, ສິ່ງນີ້ໄດ້ຖືກຮື້ອອກມາ ຍ້ອນວ່າກຸ່ມນັກຄົ້ນຄວ້ານະໂຍບາຍ ກຸ່ມທໍາອິດທີ່ຖືກສ້າງຕັ້ງຂຶ້ນໄດ້ຖືກຍົກຍ້າຍໄປຮັບໜ້າທີ່ ແລະ ຕໍາແໜ່ງອື່ນໆ ທີ່ ສໍານັກງານແຫ່ງໃໝ່. ມັນຈຶ່ງມີຄວາມຈໍາເປັນຕ້ອງໃຫ້ຮັບປະກັນ ແລະ ແນ່ໃຈວ່ານັກຄົ້ນຄວ້າຈໍານວນຫຼາຍໄດ້ເຂົ້າມາມີສ່ວນຮ່ວມໃນການຄົ້ນຄ້ວາຢ່າງບໍ່ຢຸດຢັ້ງ ແລະ ສໍາຜັດກັບການຄົ້ນຄວ້າທີ່ອີງໃສ່ຫຼັກຖານ. ເພື່ອໃຫ້ແນ່ໃຈວ່າຮັບປະກັນຄວາມຊົງຈໍາຂອງສະຖາບັນ. ນອກຈາກນັ້ນ, ຍັງຈໍາເປັນຕ້ອງມີກົນໄກ ແລະ ແຮງຈູງໃຈທີ່ຈໍາເປັນເພື່ອສ້າງສະພາບແວດລ້ອມທີ່ໝັ້ນຄົງ ແລະ ຍິ່ງໃຫຍ່ຂຶ້ນ ພ້ອມທັງສາມາດດໍາເນີນການຄົ້ນຄວ້າໄດ້ຢ່າງຕໍ່ເນື່ອງ.

### ຄວາມສໍາຄັນໃນການສ້າງຄວາມອາດສາມາດ ແລະ ການໃຫ້ຄໍາແນະນໍາ

ການສ້າງຂີດຄວາມສາມາດໃຫ້ແກ່ນັກຄົ້ນຄວ້າ ແລະ ຜູ້ຊ່ວຍນັກຄົ້ນຄ້ວາ ແມ່ນເປັນສິ່ງທີ່ມີຄວາມສໍາຄັນ. ນອກຈາກນີ້, ຄວນຈັດໃຫ້ມີຂະບວນການວາງແຜນການສືບທອດທາງດ້ານຕໍາແໜ່ງໃຫ້ເປັນລະບົບຕື່ມອີກ. ຂະບວນການຮຽນຮູ້ໃນການຈັດຕັ້ງປະຕິບັດເຮັດວຽກຕົວຈິງ ຫຼື ການຮຽນຮູ້ໂດຍການລົງມືເຮັດ ແລະ ການໃຫ້ຄໍາປຶກສາໂດຍອີງໃສ່ຫົວຂໍ້ຄົ້ນຄວ້າເປັນວິທີທາງທີ່ເຫມາະສົມ, ເນື່ອງຈາກຂໍ້ຈໍາກັດທາງດ້ານເງິນທຶນສະຫນັບສະຫນູນຄວາມສາມາດໃນໄລຍະຍາວເຊັ່ນ: ການສຶກສາລະດັບທີ່ສູງຂຶ້ນ, ໂດຍຜູ້ໃຫ້ທຶນໃດຫນຶ່ງ.

## ຄວາມສຳຄັນຂອງການເປັນຜູ້ນຳ

ການເປັນຜູ້ນຳແມ່ນມີຄວາມສຳຄັນຢ່າງຍິ່ງ ຕໍ່ການຮັບປະກັນວ່າມີພື້ນທີ່ພຽງພໍເພື່ອດຳເນີນການຄົ້ນຄ້ວາຕົວຈິງ ແລະ ນຳສະເຫນີຜົນການຄົ້ນພົບໄດ້ຈິງ. ສິ່ງສຳຄັນຄື ຕ້ອງໃຫ້ແນ່ໃຈວ່າ ຂໍ້ມູນດັ່ງກ່າວມັນສາມາດເຂົ້າໄປໃນຂະບວນການສ້າງນະໂຍບາຍ. ທັງຫມົດນີ້, ນຳສະເຫນີຊຸດການດຳເນີນການໂຕ້ຕອບ ແລະ ຫຼາກຫຼາຍແງ່ມູມ ທີ່ສະຫລັບສັບຊ້ອນ ທີ່ຜູ້ນຳຕ້ອງດຳເນີນການ ຕັ້ງແຕ່ຜູ້ມີອຳນາດຕັດສິນໃຈໄປຫານັກຄົ້ນຄວ້າ. ໂຄງສ້າງທີ່ກ່ຽວຂ້ອງຂອງຂະບວນການສ້າງນະໂຍບາຍກະສິກຳ, ໃຫ້ຄຳແນະນຳທີ່ຈັດເຈນ ແລະ ເປັນຮູບປະທຳ ໃນການມອບຫມາຍຄວາມຮັບຜິດຊອບ ແລະ ຮັບປະກັນການພົວພັນລະຫວ່າງ ຜູ້ທີ່ມີບົດບາດກ່ຽວຂ້ອງ ເຊິ່ງລວມເຖິງການກຳນົດຄວາມຕ້ອງການ, ການຈັດຫາວາລະການຄົ້ນຄວ້ານະໂຍບາຍທີ່ຈັດເຈນ ແລະ ກຳນົດໄວ້ຢ່າງດີ. ຕະຫຼອດຮອດ ການຈັດລຽງລຳດັບຄວາມສຳຄັນ ຂອງຫົວຂໍ້ການຄົ້ນຄ້ວາ ແລະ ປະເດັນບັນຫາສຳຄັນຕ່າງໆ ໂດຍຜູ້ນຳ. ນອກຈາກນີ້, ຍັງຈຳເປັນຕ້ອງມີຄວາມເປັນຜູ້ນຳທີ່ເຂັ້ມແຂງ ແລະ ການຊີ້ນຳໂດຍນັກຄົ້ນຄວ້ານະໂຍບາຍທີ່ມີປະສົບການ ແລະ ຜ່ານການຝຶກອົບຮົມມາເປັນຢ່າງດີ ເຊິ່ງມີອິດທິພົນ ແລະ ຕົ້ນທຶນທາງສັງຄົມໃນການຊີ້ນຳ ແລະ ນຳພາຂະບວນການ.

## ການນຳໃຊ້ແນວທາງແບບເຄືອຂ່າຍ ເພື່ອຂະຫຍາຍຄວາມສາມາດຈາກອົງການຈັດຕັ້ງຕ່າງໆ

ການສ້າງຂີດຄວາມສາມາດໃນການຄົ້ນຄວ້າ ໂດຍມີນັກຄົ້ນຄວ້າລະດັບປະລິນຍາເອກ ແລະ ນັກຄົ້ນຄວ້າທີ່ໄດ້ຮັບການສຶກສາຈາກຕ່າງປະເທດ ເຂົ້າຮ່ວມໂຄງການຄົ້ນຄວ້າເປັນຈຳນວນຫຼາຍ. ຈຶ່ງສາມາດສ້າງເຄືອຂ່າຍກັບນັກວິທະຍາສາດກະສິກຳ ທີ່ສຳຄັນພາຍໃນ NAFRI, NUOL ແລະ ສະຖາບັນຄົ້ນຄ້ວາອື່ນໆ. ມັນເປັນສິ່ງສຳຄັນທີ່ຕ້ອງຄຳນຶງເຖິງຄວາມຈຳເປັນໃນການອະນຸມັດຢ່າງເປັນທາງການ ຫຼື ການແຕ່ງຕັ້ງຈາກອົງການຈັດຕັ້ງຕ່າງໆ ເພື່ອໃຫ້ນັກຄົ້ນຄວ້າສາມາດເຮັດວຽກໃນໂຄງການຄົ້ນຄ້ວາພາຍໃຕ້ ຄັງຄວາມຮູ້ທາງດ້ານນະໂຍບາຍ/NAFRI.

## ການນຳໃຊ້ແບບພອມທີ່ມີຢູ່ເພື່ອຫຼີກເວັ້ນການຊັບຊ້ອນ ແລະ ເພີ່ມຊັບພະຍາກອນໃຫ້ສູງສຸດ

ນຳໃຊ້ເວທີສົນທະນານະໂຍບາຍທີ່ມີຢູ່ແລ້ວ ເພື່ອປຶກສາຫາລືບັນຫາກ່ຽວກັບປະເດັນຕ່າງໆ ແລະ ໃຫ້ຄຳແນະນຳດ້ານນະໂຍບາຍເພື່ອສະຫນັບສະຫນູນການສ້າງນະໂຍບາຍໂດຍອີງໃສ່ຫຼັກຖານ ເຊັ່ນກອງປະຊຸມ

ປະຈຳປີ ຂອງ ກະຊວງກະສິກຳ ແລະ ປ່າໄມ້, ກອງປະຊຸມຄະນະປະຕິບັດງານ ຂະແໜງກະສິກຳ ແລະ ພັດທະນາຊົນນະບົດ (SWGARD), ຄະນະກອງປະຊຸມຂະແໜງການຍ່ອຍ (SSWGs), ກິດຈະກຳການຄົ້ນຄວ້າແຫ່ງຊາດ ຈັດຕັ້ງໂດຍ NUOL ແລະ ເວທີລະຫວ່າງກະຊວງ. ເວທີເຫຼົ່ານີ້ ຍັງຈະຊ່ວຍຫຼີກເວັ້ນການຊໍ້າຊ້ອນຂອງກິດຈະກຳການຄົ້ນຄວ້າ.

**ບາດກ້າວຕໍ່ໄປ: ຄຳແນະນຳສຳລັບສະຖາບະໃນອະນາຄົດຂອງການເຊື່ອມຕໍ່ວິທະຍາສາດ ແລະ ນະໂຍບາຍ**

- ລົງທຶນໃສ່ນັກຄົ້ນຄວ້າ ແລະ ຜູ້ວາງນະໂຍບາຍລຸ້ນຕໍ່ໄປ–ສ້າງກຸ່ມນັກຄົ້ນຄ້ວາທີ່ສະຖາບັນຕ່າງໆ (NAFRI, NUOL, ກະຊວງ). ຊຸກຍູ້ ແລະ ສົ່ງເສີມໃຫ້ເຂົາເຈົ້າ ໂດຍຜ່ານທຶນການຊ່ວຍເຫຼືອດ້ານການຄົ້ນຄວ້າຂະໜາດນ້ອຍ ແລະ ໃຫ້ໂອກາດເຂົ້າຮ່ວມໃນການສ້າງຄວາມສາມາດ. ນອກຈາກນັ້ນ, ສະໜັບສະໜູນໃຫ້ນັກຄົ້ນຄວ້ານະໂຍບາຍ ຈຸດທຳອິດມີບົດບາດໃນການໃຫ້ຄຳປຶກສາ ແລະ ຊີ້ນຳ.

- ພັດທະນາກຸ່ມຜູ້ໃຫ້ທຶນ ແລະ ສະຖາບັນຄົ້ນຄວ້າສາກົນ ເພື່ອສະໜັບສະໜູນຂະບວນການນີ້. ກຸ່ມອົງການສາກົນ, ສະຖາບັນຄົ້ນຄວ້າ ແລະ ຜູ້ໃຫ້ທຶນທີ່ມີຄວາມສົນໃຈ ແລະ ເຕັມໃຈສາມາດຖືກມາຮ່ວມກັນເພື່ອໃຫ້ການສະໜັບສະໜູນທີ່ສອດຄ່ອງກັນໃນການຈັດລະບຽບໃໝ່. ການລິເລີ່ມການຄົ້ນຄວ້າ CGIAR ຍັງສາມາດກຳນົດຄຳຖາມນະໂຍບາຍທີ່ກ່ຽວຂ້ອງ ແລະ ສະໜັບສະໜູນການຄົ້ນຄວ້າກ່ຽວກັບສິ່ງເຫຼົ່ານີ້.

- ຮັບປະກັນໃຫ້ແນ່ໃຈວ່າ ການຄົ້ນຄວ້ານະໂຍບາຍ ຕາມຄວາມຕ້ອງການ: ການວິພາກວິຈານທີ່ສຳຄັນຂອງການຄົ້ນຄວ້າທີ່ຜ່ານມາແມ່ນຄືການຂັບເຄື່ອນໂດຍຜູ້ໃຫ້ທຶນເປັນສ່ວນໃຫຍ່. ຖ້າການຄົ້ນຄວ້າເຊີງນະໂຍບາຍເພື່ອຕອບສະໜອງປະເດັ່ນບັນຫາທີ່ຖືກກຳນົດຈາກລັດຖະບານ ແລະ ຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນອື່ນໆ, ມັນຈະມີຄວາມສ່ຽງໜ້ອຍລົງທີ່ຈະມີອິດທິພົນທາງດ້ານຜົນປະໂຫຍດພິເສດ.

- ຄວາມເປັນຜູ້ນຳຂອງລັດຖະບານໃນການສ້າງພື້ນທີ່ສຳລັບການຄົ້ນຄວ້າເຊີງນະໂຍບາຍ: ປະຈຸບັນ, ຍັງບໍ່ມີອຳນາດທີ່ຊັດເຈນ ສຳລັບການຄົ້ນຄວ້າເຊີງນະໂຍບາຍໃນ LASES ແລະ NAFRI ຄວນສ້າງແຜນການດຳເນີນງານຂອງສະຖາບັນ ເພື່ອຈັດ ແລະ ສະໜອງໃຫ້ມີຄວາມເປັນຜູ້ນຳພາ ແລະ ກົນໄກທີ່ຊັດເຈນສຳລັບການຄົ້ນຄວ້ານະໂຍບາຍ.

- ເຊື່ອມໂຍງວາລະການຄົ້ນຄວ້າໄປສູ່ລະດັບທີ່ສູງຂຶ້ນເຊັ່ນ: ການຕັດສິນໃຈຂອງສະພາແຫ່ງຊາດ ແລະ ການຕັດສິນໃຈຂອງພັກ ເພື່ອພິຈາລະນາສ້າງເຄືອຂ່າຍນັກຄົ້ນຄ້ວານະໂຍບາຍທີ່ກວ້າງຂຶ້ນ ນອກເ ໜືອຈາກ MAF.

- ສ້າງເວທີສົນທະນາ ແລະ ໂອກາດ ໃນການສົ່ງເສີມການແລກປ່ຽນລະຫວ່າງນັກຄົ້ນຄວ້າ/ ນັກວິທະຍາສາດ ແລະ ຜູ້ກໍານົດນະໂຍບາຍເພື່ອຈັດລໍາດັບຄວາມສໍາຄັນຂອງບັນຫາ ແລະ ຄໍາຖາມ ການຄົ້ນຄວ້າ.

- ປັບປຸງການລວມຕົວຂອງການໂຕ້ຕອບນະໂຍບາຍວິທະຍາສາດ: ຈໍາເປັນຕ້ອງເຂົ້າໃຈທັດສະນະ ຄວາມຮູ້ທີ່ແຕກຕ່າງກັນໃນຂະບວນການນະໂຍບາຍ. ອັນນີ້ອາດລວມເຖິງທັດສະນະຂອງແມ່ຍິງ, ຕົວແທນຊາວກະສິກອນ ແລະ ຊຸມຊົນຊົນເຜົ່າພື້ນເມືອງ.

- ການນໍາໃຊ້ເຄື່ອງມືດິຈິຕອນ ລວມທັງປັນຍາປະດິດ (AI): ມີໂອກາດທີ່ຈະນໍາໃຊ້ AI ເພື່ອເປັນແຫຼ່ງ ທາງເລືອກນະໂຍບາຍ ແລະ ໃຫ້ຮັບປະກັນ ການຕອບສະໜອງທັນທີທັນໃດຫຼາຍຂຶ້ນ ເມື່ອນໍາໃຊ້ ຢ່າງສະຫລາດ. ນັກຄົ້ນຄວ້າໄວໜຸ່ມສາມາດໄດ້ຮັບການຊຸກຍູ້ໃຫ້ເຮັດວຽກໃນຂົງເຂດນີ້.

---

## ກ່ຽວກັບຜູ້ຂຽນ

ທ່ານ ນາງ ລັດສະໝີ ພູນວິສຸກ, ຮອງຫົວໜ້າສູນຄົ້ນຄ້ວາເສດຖະກິດ ແລະ ພັດທະນາຊົນນະບົດ, NAFRI

ທ່ານ ໄມເຄີລ ວິກເຕີ, ຫົວໜ້າ ການສື່ສານ ແລະ ການຄຸ້ມຄອງຄວາມຮູ້, ILRI

ທ່ານ ນາງ ແສງພະຈັນ ສອນທະວີໄຊ, ຜູ້ຊ່ຽວຊານດ້ານນະໂຍບາຍ ແລະ ສະຖາບັນ (IWMI) ແລະ CGIAR ສູນຄວາມຄິດລິເລີ່ມດ້ານ

ນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ

---

## ຄໍາຂອບໃຈ ແລະ ຄວາມຮູ້ບູນຄຸນ

ການສຶກສາຄົ້ນຄ້ວາຄັ້ງນີ້ ອາດຈະບໍ່ປະສົບຜົນສໍາເລັດໄດ້ ຖ້າຫາກປາສະຈາກການສະໜັບສະໜູນຈາກຫຼາຍໆ ອົງການຈັດຕັ້ງ ແລະ ຫຼາຍໆຄົນ. ກ່ອນອື່ນທີມງານນັກຂຽນ, ຂໍສະແດງຄວາມຂອບອົກຂອບໃຈມາຍັງ ທ່ານ ປອ. ລິນຄໍາ ດວງສະຫວັນ, ທ່ານ ປອ. ປາຣິສັກ ປຣະວົງວຽງຄໍາ, ທ່ານ ປອ. ບູນຖອງ ບົວຫອມ, ທ່ານ ປອ. ນາງ ໃຈ ບູນພະນູໄຊ, ທ່ານ ປອ. ຈັນສະໝອນ ພົງອຸດົມ, ທ່ານ ປອ. ຄໍາພູ ຜຸຍຍະວົງ, ທ່ານ ປອ. ວົງປະພັນ ມານີວົງ, ທ່ານ ປອ. ອາລູນ ພູນວິໄຊ, ທ່ານ Andrew Bartlett, Dr. Clemens Grubenhel (ACIAR), Dr. Mark Dubois, Alan Nicol Leonard Kitui Joyce Maru, ທີ່ໄດ້ເສຍສະຫຼະເວລາອັນມີຄ່າເຂົ້າຮ່ວມ ສົນທະນາ, ປຶກສາຫາລື ແລະ ໃຫ້ຄໍາແນະນໍາ ທີ່ດີ ແລະ ເປັນປະໂຫຍດທີ່ສໍາຄັນທີ່ສຸດ ສໍາລັບການຄົ້ນຄ້ວາຄັ້ງນີ້.

ວຽກງານນີ້ແມ່ນສ່ວນຫນຶ່ງຂອງການລິເລີ່ມການຄົ້ນຄວ້າຂອງໂຄງການ CGIAR ກ່ຽວກັບນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ (NPS). CGIAR ເປີດຕົວ NPS ກັບຄູ່ຮ່ວມງານລະດັບຊາດ ແລະ ສາກົນ ເພື່ອສ້າງຄວາມສອດຄ່ອງທາງດ້ານນະໂຍບາຍ, ຕອບສະໜອງຕໍ່ວິກິດການ, ແລະ ການເຊື່ອມໂຍງເຄື່ອງມືນະໂຍບາຍໃນລະດັບຊາດ ແລະ ລະດັບຍ່ອຍ ໃນຫົກປະເທດໃນອາຟຣິກາ, ອາຊີ ແລະ ອາເມລິກາລາຕິນ. IFPRI and ILRI, two CGIAR Centres participating in NPS, prepared this publication. Other CGIAR centres participating in NPS are: International Water Management Institute (IWMI), International Potato Centre (CIP), The Alliance of Bioversity International and the International Centre for Tropical Agriculture (Alliance Bioversity-CIAT), International Institute of Tropical Agriculture (IITA), and WorldFish. We would like to thank all funders who supported this research through their contributions to the CGIAR Trust Fund: [https://www.cgiar.org/funders/](https://www.cgiar.org/funders/)

## References

Douangsavanh, L. 2012. How to harmonize policy research? A clear need for coordination. Policy Think Tank Presentation to ANR meeting on 4 July 2012 by Dr. Linkham Douangsavanh Deputy Director – General National Agriculture and Forestry Research Institute

Ministry of Agriculture and Forestry. 2010. Agriculture Development Strategy 2020. Vientiane Lao PDR

NAFRI. 2008. Medium-Term Frame and Strategy Agriculture and Forestry Policy Research Centre (AFPRC). NAFRI, Vientiane Lao PDR

NAFRI. 2020. Building an evidence base for policy formulation in the agriculture and rural development sector in Lao PDR. NAFRI, Vientiane Lao PDR

Pal, L. 2014. *Beyond Policy Analysis – Public Issue Management in Turbulent Times*, *Fifth Edition*, Toronto, Canada: Nelson Education. See Beyond Policy Analysis – Book Highlights.

Sonethavixay, S. 2020. Research impacts on policy experiences and lessons learned. Strengthening Policy Research for Agriculture Policy Development Project (SRAPD). Presentation at the Capitalization Meeting on Policy Think Tank, 23 December 2020

## ເອກະສານຊ້ອນທ້າຍ 1: ລາຍຊື່ການຄົ້ນຄ້ວາ ແລະ ສິ່ງຕີພິມ

1. ສະພາບໂພສະນາການຂອງເດັກນ້ອຍ, ຄວາມຫຼາກຫຼາຍຂອງການບໍລິໂພກອາຫານ ແລະ ລົບເຜົ່າໃນ ສ ປປ ລາວ
2. ສັນຍາກະສິກຳ/ການສົ່ງເສີມຜະລິດກະສິກຳແບບມີຂໍ້ຜູກພັນສັນຍາ
3. ການຜະລິດກະສິກຳແບບຍືນຍົງ: ກໍລະນີການສຶກສາການຜະລິດກ້ວຍເປັນສິນຄ້າໃນ ສ ປປ ລາວ
4. ການພັດທະນາຕ່ອງໂສ້ມູນຄ່າຂອງເຄື່ອງປ່າຂອງດົງໃຫ້ສູງຂຶ້ນສຳລັບເຂດເນີນສູງຂອງ ສ ປປ ລາວ: ກໍລະນີການຜະລິດນ້ຳມັນຍາງ
5. ການວິເຄາະນະໂຍບາຍ ແລະ ສະຖາບັນກະສິກຳແບບຍືນຍົງ ແລະ ສີຂຽວ ໃນ ສ ປປ ລາວ
6. ການຜະລິດມັນຕົ້ນເພື່ອເປັນສິນຄ້າໃນ ສ ປປ ລາວ
7. ປັດໃຈ ແລະ ຜົນກະທົບຂອງການຜະລິດງົວ ແລະ ຄວາຍ ແບບຍືນຍົງ ໃນ ສ ປປ ລາວ
8. ປັດໃຈ ແລະ ຜົນກະທົບຂອງການປູກກ້ວຍເປັນສິນຄ້າ (ກ້ວຍນ້ຳ) ແບບຍືນຍົງໃນ ສ ປປ ລາວ
9. ໂອກາດການຜະລິດຖົ່ວນຂາວແບບຍືນຍົງໃນ ສ ປປ ລາວ
10. ການປະມົງ ແລະ ການລ້ຽງປາແບບຍືນຍົງ ເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະ ໂພສະນາການໃນ ສ ປປ ລາວ
11. ການເຂົ້າເຖິງເງິນເຊື່ອຂອງຊາວກະສິກອນໃນ ສ ປປ ລາວ
12. ການເຄື່ອນໄຫວຂອງການເກີດຄວາມທຸກຍາກ ແລະ ການຫຼຸດພົ້ນອອກຈາກຄວາມທຸກຍາກແບບຍືນຍົງ
13. ການກຳນົດການປະຕິບັດການທ່ອງທ່ຽວນິເວດທີ່ດີເພື່ອການພັດທະນາແບບຍືນຍົງໃນເຂດປ່າສະຫງວນແຫ່ງຊາດພາກເໜືອ ສ ປປ ລາວ
14. ການສ້າງຄວາມເຂັ້ມແຂງທາງດ້ານບົດບາດຍິງ-ຊາຍ ໃນຂະແໜງກະສິກຳ ໃນ ສ ປປ ລາວ
15. ການປະກັນໄພກະສິກຳ: ກໍລະນີການສຶກສາເຂົ້າ ແລະ ໝູ
16. ບົດສະຫຼຸບນະໂຍບາຍ ການບົດລອກທ່າແຮງອັນເຕັມທີ່ຂອງຂະແໜງຊາ ໃນ ສ ປປ ລາວ (2018)

17. ສະຫຼຸບສັງລວມການຄົ້ນຄ້ວາໝູນໃຊ້ພື້ນທີ່ໃກ້ຄຽງທາງດ້ານເສດຖະກິດ ແລະ ການຄ້າກະສິກຳ (2020)

18. Negotiating the forest-fallow interface: Benzoin trees in multi-functional landscapes (2020)

*This is publication has not been peer reviewed. Any opinions stated herein are those of the author(s) and not necessarily representative of or endorsed by CGIAR, NAFRI, ILRI, CIP, and IWMI*

**NAME OF INSTITUTION**

ADDRESS INFORMATION

© 2023 *[Publishing Institution]*. This publication is licensed for use under a Creative Commons Attribution 4.0 International License (CC BY 4.0). To view this license, visit https://creativecommons.org/licenses/by/4.0.